

# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງ, ຂ່າວໃນພາກພື້ນ ແລະ ສາກົນ............ ໜ້າ 01-06

II. ການເຄື່ອນໄຫວຂອງການນຳຂັ້ນສູງ ແລະ ໂທລະເລກຊົມເຊີຍວັນສ້າງຕັ້ງພັກ ປປ ລາວ.... ໜ້າ 06 -07

III. ການເຄື່ອນໄຫວວຽກງານຂອງຄະນະນຳ ຄຕພ................................................... ໜ້າ 08-16

IV. ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ ຄຕພ...............................................ໜ້າ 17-18


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ **ມີນາ 2023**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງ ບັນດາພັກການເມືອງ, ພາກພື້ນ ແລະ ສາກົນ

## 1. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ໃນໄລຍະເດືອນມີນາ, ຫວຽດນາມ ມີຫຼາຍເຫດການການເມືອງສຳຄັນ ເປັນຕົ້ນ: ໃນວັນທີ 02/03/2023, ສະພາແຫ່ງຊາດຫວຽດນາມ ໄດ້ຜ່ານມະຕິເລືອກຕັ້ງເອົາ ສະຫາຍ ຫວໍ ວັນເຖື້ອງ (Vo Van Thuong), ຜູ້ປະຈຳການຄະນະເລຂາທິການສູນກາງພັກກອມມູນິດຫວຽດນາມ ເປັນປະທານປະເທດຫວຽດນາມ ຄົນທີ 11. ສະຫາຍ ຫວໍ ວັນເຖື້ອງ ເຄີຍດຳລົງຕຳແໜ່ງຫົວໜ້າຄະນະໂຄສະນາອົບຮົມສູນກາງພັກກອມມູນິດຫວຽດນາມ; ຮອງເລຂາພັກນະຄອນໂຮ່ຈິມິນ; ເລຂາຊາວໜຸ່ມນະຄອນໂຮ່ຈິມິນ; ປະທານສະຫະພັນຊາວໜຸ່ມຫວຽດນາມ. ວັນທີ 06/03/2023, ກົມການເມືອງສູນກາງພັກ ສະໄໝທີ XIII ໄດ້ເປີດກອງປະຊຸມເພື່ອພິຈາລະນາ ແລະ ປະກອບຄຳເຫັນຕໍ່ວຽກງານພະນັກງານ, ຊຶ່ງໃນກອງປະຊຸມໄດ້ຕົກລົງເຫັນດີ ແລະ ແຕ່ງຕັ້ງ ສະຫາຍ ນາງ ເຈື່ອງທິມາຍ, ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ ໃຫ້ດຳລົງຕຳແໜ່ງເປັນຜູ້ປະຈຳການຄະນະເລຂາທິການສູນກາງພັກ ສະໄໝທີ XIII, ຫົວໜ້າຄະນະຈັດຕັ້ງສູນກາງພັກ.

ນອກຈາກນັ້ນ, ການນຳຫວຽດນາມ ໄດ້ເຄື່ອນໄຫວວຽກງານຕ່າງປະເທດເປັນປົກກະຕິ ເຊັ່ນ: ວັນທີ 18/03/2023, ທ່ານ ຫວໍ ວັນເຖືອງ, ປະທານປະເທດຫວຽດນາມ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ Prak Sokhonn, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງຕ່າງປະເທດ ແລະ ການຮ່ວມມືສາກົນກຳປູເຈຍ,ເຊິ່ງສອງຝ່າຍ ໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ ແລະ ການຮ່ວມມືຮອບດ້ານລະຫວ່າງສອງປະເທດຫວຽດນາມ-ກຳປູເຈຍ. ໃນນັ້ນ, ທ່ານ Prak Sokhonn ໄດ້ຊົມເຊີຍຜົນສຳເລັດອັນໃຫຍ່ຫຼວງໃນການພັດທະນາເສດຖະກິດ-ສັງຄົມ, ເຊື່ອໝັ້ນວ່າຫວຽດນາມຈະປະຕິບັດບັນດາຄາດໝາຍການຫັນເປັນອຸດສາຫະກຳ ແລະ ທັນສະໄໝໃນປີ 2023.

ວັນທີ 01/03/2023, ທ່ານ ຟ້າມ ມິ່ງຈິງ, ນາຍົກລັດຖະມົນຕີຫວຽດນາມ ໄດ້ຕ້ອນຮັບ ທ່ານ Olivier Becht, ລັດຖະມົນຕີຕ່າງປະເທດຝຣັ່ງ. ທ່ານ ຟາມ ມິງຈິງ ໄດ້ກ່າວວ່າ ສສ ຫວຽດນາມ ຈະສືບຕໍ່ຮ່ວມມືກັບຝຣັ່ງ ແລະ ຍາດແຍ່ງທ່າໄດ້ປຽບຈາກສະຫະພາບເອີຣົບ; ໄດ້ສະເໜີໃຫ້ຝຣັ່ງ ຊ່ວຍຊຸກຍູ້ຕໍ່ກັບສົນທິສັນຍາການລົງທຶນລະຫວ່າງ ສສ ຫວຽດນາມກັບເອີຣົບ ເພື່ອສ້າງເງື່ອນໄຂໃຫ້ການລົງທຶນລະຫວ່າງສອງປະເທດ. ສ່ວນ ທ່ານ Becht ໄດ້ກ່າວວ່າ ຝຣັ່ງຈະສືບຕໍ່ຊຸກຍູ້ການຮ່ວມມືສອງຝ່າຍໃນບັນດາຂົງເຂດຕ່າງໆ ເຊັ່ນ: ການພັດທະນາໃນຕົວເມືອງ, ພະລັງງານສີຂຽວ, ສ້າງເງື່ອນໄຂໃຫ້ຄົນຫວຽດນາມທີ່ອາໄສຢູ່ຝຣັ່ງໃຫ້ມີວຽກເຮັດງານທຳ ແລະ ອື່ນໆ. ສອງຝ່າຍ ຍັງໄດ້ແລກປ່ຽນໃນບັນຫາທະເລຈີນໃຕ້ ໂດຍເນັ້ນໜັກເຖິງການຮັກສາສັນຕິພາບ, ສະຖຽນລະພາບ, ຄວາມໝັ້ນຄົງ, ການແກ້ໄຂບັນຫາດ້ວຍສັນຕິວິທີບົນພື້ນຖານກົດໝາຍສາກົນ ແລະ ສົນທິສັນຍາ ສປຊ ກ່ຽວກັບກົດໝາຍທະເລ ປີ 1982 (UNCLOS).

### 2). ພັກກອມມູນິດຈີນ

ພາຍຫຼັງກອງປະຊຸມຄົບຄະນະຂອງຄະນະກຳມະການສູນກາງພັກກອມມູນິດຈີນ ຄັ້ງທີ 2 ສະໄໝທີ XX ທີ່ຈັດຂຶ້ນໃນວັນທີ 26-28/02/202 ທີ່ ນະຄອນຫຼວງປັກກິ່ງ. ກອງປະຊຸມຄັ້ງປະຖົມມະລຶກຂອງ ສະພາປະຊາຊົນແຫ່ງຊາດຈີນ (NPC) ຊຸດທີ 14 ໄດ້ໄຂຂຶ້ນ ແຕ່ວັນທີ 05-13/03/2023, ປະກອບມີ 9 ວາລະສຳຄັນ ຄື: 1) ສຳຫຼວດພິຈາລະນາບົດລາຍງານວຽກງານຂອງລັດຖະບານ; 2) ຮ່າງສຳຫຼວດບົດລາຍງານການວາງແຜນ ແລະ ແຜນການ; 3) ຮ່າງສຳຫຼວດບົດລາຍງານການໃຊ້ງົບປະມານ ແລະ ແຜນງົບປະມານ; 4) ສຳຫຼວດພິຈາລະນາຍັດຕິຂອງຄະນະກຳມະການປະຈຳສະພາປະຊາຊົນແຫ່ງຊາດກ່ຽວກັບການສະເໜີໃຫ້ສຳຫຼວດພິຈາລະນາ "ຮ່າງກົດໝາຍ ວ່າດ້ວຍນິຕິບັນຍັດ ແຫ່ງ ສປ ຈີນ ສະບັບດັດແກ້"; 5) ສຳຫຼວດພິຈາລະນາບົດລາຍງານວຽກງານຂອງ ຄະນະປະຈຳສະພາປະຊາຊົນແຫ່ງຊາດຈີນ; 6) ສຳຫຼວດພິຈາລະນາບົດລາຍງານວຽກງານຂອງສານປະຊາຊົນສູງສຸດ; 7) ສຳຫຼວດພິຈາລະນາບົດລາຍງານວຽກງານຂອງ ອົງການໄອຍະການປະຊາຊົນສູງສຸດ; 8) ສຳຫຼວດພິຈາລະນາແຜນການປະຕິຮູບຂອງອົງການລັດຖະບານ ແລະ 9) ເລືອກຕັ້ງ ແລະ ຕົກລົງແຕ່ງຕັ້ງຄະນະລັດຖະບານຊຸດໃໝ່. ກອງປະຊຸມສະພາ ຍັງໄດ້ກຳນົດເປົ້າໝາຍການຂະຫຍາຍຕົວ

ຂອງ (GDP) ປະຈໍາປີ 2023 ເພີ່ມຂຶ້ນ 5% ຈາກປີຜ່ານມາ; ອັດຕາຂາດດຸນຂອງ (GDP) 3%; ການສ້າງວຽກເຮັດງານທໍາໃນຕົວເມືອງ ເພີ່ມຂຶ້ນຈາກ 11 ລ້ານຕໍາແໜ່ງ ເປັນ 12 ຕໍາແໜ່ງ; ຄາດຄະເນອັດຕາການວ່າງງານ 5,5%; ຫຼຸດອັດຕາພາສີຈາກ 9,8% ເປັນ 7,4%. ເພີ່ມງົບປະມານການປ້ອງກັນປະເທດ ຈາກ 7,1% ເປັນ 7,2% (1,55 ພັນຕື້ຢວນ ຫຼື 224,79 ຕື້ໂດລາ). ສໍາລັບວຽກງານກ່ຽວກັບໄຕ້ຫວັນ, ສປ ຈີນ ຈະສືບຕໍ່ຢ່າງເດັດດ່ຽວຕໍ່ສູ້ກັບການແຊກແຊງຈາກພາຍນອກ ແລະ ຄວາມພະຍາຍາມໃນການແບ່ງແຍກດິນແດນ ພ້ອມທັງສົ່ງເສີມການພັດທະນາຢ່າງສັນຕິຢູ່ຊ່ອງແຄບໄຕ້ຫວັນ. ສ່ວນ ຮົງກົງ ແລະ ມາກາວ  ຄວນໄດ້ຮັບການປົກຄອງດ້ວຍຜູ້ຮັກຊາດ ແລະ ຮັບປະກັນວ່າຮົງກົງໄດ້ກ້າວສູ່ໄລຍະໃໝ່ໃນການຟື້ນຟູຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມຈະເລີນຮຸ່ງເຮືອງ. ກອງປະຊຸມ ໄດ້ເລືອກທ່ານ ສີ ຈິ້ນຜິງ ໃຫ້ດໍາລົງຕໍາແໜ່ງເປັນປະທານປະເທດ ສປ ຈີນ, ປະທານຄະນະກໍາມະການກອງທັບສູນກາງພັກ ສະໄໝທີ 03 ດ້ວຍຄະແນນສຽງເປັນເອກະສັນ; ທ່ານ ຫານ ເຈີ້ງ (Han Zheng) ເປັນຮອງປະທານປະເທດ. ພ້ອມນີ້, ກອງປະຊຸມໄດ້ຮັບຮອງ ທ່ານ ຫຼີ ສຽງ (Li Qiang) ເປັນນາຍົກລັດຖະມົນຕີ ແລະ ຮັບຮອງເອົາເລຂາທິການລັດຖະບານ (ເລຂາທິການສະພາແຫ່ງລັດ) ແລະ ຄະນະລັດຖະບານອີກ 26 ທ່ານ. ໃນນັ້ນ ທ່ານ ຫວູ ເຈີ້ງຫຼົງ )Wu Zhenglong), ເປັນເລຂາທິການລັດຖະບານ; ທ່ານ ສິນ ກ່າງ (Qin Gang), ເປັນລັດຖະມົນຕີຕ່າງປະເທດ; ທ່ານ ຫຼີ ຊາງຝູ່ (Li Shangfu), ເປັນລັດຖະມົນຕີກະຊວງປ້ອງກັນປະເທດ; ທ່ານ ເຈີ້ງ ຊານເຈຍ (Zheng Shanjie), ເປັນຫົວໜ້າຄະນະກໍາມະການພັດທະນາ ແລະ ປະຕິຮູບແຫ່ງຊາດ; ທ່ານ ຫວຍ ຈິນເຜີງ (Huai Jinpeng), ເປັນລັດຖະມົນຕີກະຊວງສຶກສາ; ທ່ານ ຫວັງ ຈີກ່າງ (Wang Zhigang), ເປັນລັດຖະມົນຕີກະຊວງວິທະຍາສາດ ແລະ ເຕັກໂນໂລຊີ; ທ່ານ ຈິນ ຈ່ວງຫຼົງ (Jin Zhuanglong), ເປັນລັດຖະມົນຕີກະຊວງອຸດສາຫະກໍາ ແລະ ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ອື່ນໆ.

ທ່ານ ສີ ຈິ້ນຜິງ ໄດ້ກ່າວຫຼັງຈາກຮັບເລືອກຕັ້ງ ໂດຍສະແດງຄວາມຂອບໃຈຕໍ່ຜູ້ແທນສະພາປະຊາຊົນແຫ່ງຊາດ ແລະ ປະຊາຊົນບັນດາເຜົ່າໃນທົ່ວປະເທດ ທີ່ໄວ້ເນື້ອເຊື່ອໃຈຕໍ່ຕົນເອງ ແລະ ວ່າຈະປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບສູງຕາມລັດຖະທໍາມະນູນທີ່ວາງອອກ; ຖືຄວາມຕ້ອງການຂອງປະເທດເປັນພາລະກໍາ, ຖືຜົນປະໂຫຍດຂອງປະຊາຊົນເປັນມາດຕະຖານ; ເນັ້ນໜັກເຖິງຄວາມຈໍາເປັນໃນການປະຕິບັດນະໂຍບາຍ “ໜຶ່ງປະເທດ ສອງລະບອບ” ຢ່າງເຕັມທີ່, ຊື່ສັດ ແລະ ເດັດດ່ຽວ; ພະຍາຍາມສົ່ງເສີມການສ້າງປະຊາຄົມຮ່ວມຊະຕາກໍາຂອງມວນມະນຸດ; ເປີດກວ້າງການພັດທະນາ ແລະ ຊຸກຍູ້ການພັດທະນາໃນທົ່ວໂລກ.

ຫຼັງຈາກນັ້ນ, ວັນທີ 20-22/03/2023, ທ່ານ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກໍາມະການສູນກາງພັກກອມມູນິດຈີນ, ປະທານປະເທດຈີນ ໄດ້ເດີນທາງຢ້ຽມຢາມລັດເຊຍທາງລັດຖະກິດ, ຊຶ່ງເປັນການຢ້ຽມຢາມຕ່າງປະເທດຄັ້ງທໍາອິດພາຍຫຼັງໄດ້ຮັບຕໍາແໜ່ງເປັນປະທານປະເທດຈີນ ສະໄໝທີ 03 ແລະ ໄດ້ພົບປະກັບ ທ່ານ ວາລາດີເມຍ ປູຕິນ, ປະທານາທິບໍດີລັດເຊຍ. ໃນນັ້ນ, ທ່ານ ສີ ຈິ້ນຜິງ ໄດ້ກ່າວກັບ ທ່ານ ປູຕິນ ວ່າ ການປ່ຽນແປງຄັ້ງສໍາຄັນກໍາລັງຈະເກີດຂຶ້ນໃນຮອບ 100 ປີ, ຊຶ່ງ ສປ ຈີນ ແລະ ລັດເຊຍ ຈະຊຸກຍູ້ການປ່ຽນແປງດັ່ງກ່າວຮ່ວມກັນ ແລະ ໄດ້ສົນທະນາກັບ ທ່ານ ປູຕິນ ດ້ວຍຄວາມເປັນມິດແທ້ ແລະ ມີປະໂຫຍກໜຶ່ງວ່າ “ຮັກສາສຸຂະພາບດ້ວຍໝູ່ຮັກ”. ຜູ້ນໍາສອງປະເທດໄດ້ເຊັນສັນຍາການຮ່ວມກັນ 02 ສະບັບ (ແຜນການພັດທະນາການຮ່ວມມືເສດຖະກິດຈີນ-ລັດເຊຍ ຮອດປີ 2030 ແລະ ການລົງເລິກສາຍພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານໃນຍຸກສະໄໝໃໝ່); ບົດບັນທຶກຄວາມເຂົ້າໃຈ 06 ສະບັບ: ໃນຂົງເຂດການຄ້າ, ປ່າໄມ້, ກະສິກໍາ, ການປົກປ້ອງຜູ້ບໍລິໂພກ, ພື້ນຖານໂຄງລ່າງຢູ່ຕາເວັນອອກຂອງລັດເຊຍ ແລະ ອົງການພະລັງງານປະລະມານູນຂອງຈີນ ທີ່ໄດ້ຕົກລົງກ່ຽວກັບ "ໂຄງການຮ່ວມມືໄລຍະຍາວທາງດ້ານເຄື່ອງປະຕິກອນນິວຕ້ອນ ແລະ ປິດວົງຈອນນໍ້າມັນເຊື້ອໄຟນິວເຄຼຍ". ສອງຝ່າຍ ຍັງໄດ້ແລກປ່ຽນຄໍາຄິດຄໍາເຫັນຢ່າງເລິກເຊິ່ງຕໍ່ກັບບັນຫາອູແກຣນ, ສປ ຈີນ ສະໜັບສະໜູນການແກ້ໄຂວິກິດການທາງການເມືອງ, ຄັດຄ້ານແນວຄິດສົງຄາມເຢັນ ແລະ ການລົງໂທດຝ່າຍດຽວ. ສປ ຈີນ ຈະສືບຕໍ່ເສີມຂະຫຍາຍບົດບາດທີ່ມີລັກສະນະສ້າງສັນໃນການຊຸກຍູ້ການແກ້ໄຂບັນຫາທາງການເມືອງຕໍ່ຂໍ້ຂັດແຍ່ງອູແກຣນ-ລັດເຊຍ. ທ່ານ ປູຕິນ ກ່າວເຖິງກົນໄກທາງການທູດ 12 ຂໍ້ທີ່ຈີນສະເໜີເພື່ອແກ້ໄຂບັນຫາສັນຕິພາບພາຍໃນອູແກຣນ ວ່າມີຄວາມສອດຄ່ອງກັບການດໍາເນີນງານຂອງລັດເຊຍ

ແລະ ສາມາດນຳໃຊ້ເປັນພື້ນຖານຂອງການເຈລະຈາການທູດເພື່ອແກ້ໄຂຂໍ້ຂັດແຍ່ງຢ່າງສັນຕິ, ແຕ່ແຜນດັ່ງກ່າວຍັງບໍ່ທັນໄດ້ຮັບການເຫັນພ້ອມຈາກອູແກຣນ ແລະ ຕາເວັນຕົກ.

**2. ສະພາບການພາກພື້ນ ແລະ ສາກົນ**

**1) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກາ**

- ຂົງເຂດນີ້ ສືບຕໍ່ມີຄວາມເຄັ່ງຕຶງ, ມີການຂົ່ມຂູ່ກັນໄປມາໃນແຫຼມເກົາຫຼີ ດ້ວຍການຊ້ອມຮົບ ແລະ ການຍິງລູກສອນໄຟຕອບໂຕ້ຂອງອີກຝ່າຍ, ເປັນຕົ້ນໃນລະຫວ່າງວັນທີ 13-23/03/2023, ສ.ເກົາຫຼີ ແລະ ອາເມລິກາ ໄດ້ຮ່ວມກັນຊ້ອມຮົບ ພາຍໃຕ້ຫົວຂໍ້: Freedom Shield, ໂດຍມີການຝຶກຊ້ອມແບບຈຳລອງສະຖານະການ ແລະ ການຝຶກຊ້ອມພາກສະໜາມຂະໜາດໃຫຍ່. ສປປ ເກົາຫຼີ ໄດ້ຮຽກຮ້ອງໃຫ້ ສປຊ ແລະ ປະຊາຄົມໂລກກົດດັນໃຫ້ອາເມລິກາຢຸດຕິການຍຸແຍ່ສ້າງສະພາບການໃນແຫຼມເກົາຫຼີ ເພາະຍິ່ງເຮັດໃຫ້ສະພາບການເຄັ່ງຕຶງຂຶ້ນ. ຫຼັງຈາກນັ້ນ, ສປປ ເກົາຫຼີ ໄດ້ຕອບໂຕ້ ດ້ວຍການທົດລອງຍິງລູກສອນໄຟຫຼາຍກວ່າ 10 ລູກ. ຕໍ່ສະຖານະການດັ່ງກ່າວ, ສປ ຈີນ ໄດ້ຖະແຫຼງສະແດງຄວາມກັງວົນຕໍ່ການຊ້ອມຮົບດັ່ງກ່າວ ຈະສົ່ງຜົນໃຫ້ແຫຼມເກົາຫຼີມີຄວາມສັບສົນ ແລະ ອ່ອນໄຫວທີ່ສຸດ, ທຸກຝ່າຍຄວນອົດກັ້ນ ເພື່ອສະຖຽນລະພາບໃນເຂດດັ່ງກ່າວ. ວັນທີ 11/03/2023, ອົງການພົນລະເຮືອນຫຼາຍແຫ່ງຂອງ ສ.ເກົາຫຼີ ໄດ້ໂຮມຊຸມນຸມປະທ້ວງຢູ່ຕໍ່ໜ້າ ສຳນັກງານປະທານາທິບໍດີໂດຍຖືປ້າຍຄຳຂວັນ: ຢຸດຕິການຊ້ອມຮົບ, ເລີ່ມການສົນທະນາຄືນໃໝ່.

- ວັນທີ 16/03/2023, ທ່ານ ຢຸນ ຊ໋ອກຢອນ, ປະທານາທິບໍດີ ສ.ເກົາຫຼີ ໄດ້ເດີນທາງຢ້ຽມຢາມຍີ່ປຸ່ນ ແລະເຂົ້າຮ່ວມກອງປະຊຸມສຸດຍອດ ກັບ ທ່ານ ຟູມິໂອະ ຄິຊິດະ, ນາຍົກລັດຖະມົນຕີຍີ່ປຸ່ນ, ຊຶ່ງເປັນການຢ້ຽມຢາມຍີ່ປຸ່ນຂອງຜູ້ນຳ ສ.ເກົາຫຼີ ໃນຮອບ 12 ປີ. ສອງຜູ້ນຳໄດ້ປຶກສາຫາລືກັນໃນຫຼາຍບັນຫາໂດຍສະເພາະການບັງຄັບໃຊ້ແຮງງານໃນສະໄໝສົງຄາມ; ການຍົກເລີກການຈຳກັດການສົ່ງອອກສິນຄ້າຕ່າງໆເປັນຕົ້ນ: Semiconductor; ການໄປມາຫາສູ່ກັນຢ່າງເປັນປົກກະຕິ; ການແລກປ່ຽນທາງດ້ານຄວາມໝັ້ນຄົງ, ເສດຖະກິດ, ການແບ່ງປັນຂ່າວຮ່ວມກັນ ແລະ ການຟື້ນຟູສາຍພົວພັນຂອງສອງປະເທດຄືນໃໝ່. ແຕ່ຍັງມີປະຊາຊົນເກົາຫຼີ ຈຳນວນໜຶ່ງ ບໍ່ເຫັນດີຕໍ່ການຟື້ນຟູສາຍພົວພັນຂອງສອງປະເທດໃນຄັ້ງນີ້ ແລະ ໄດ້ໂຮມຊຸມນຸມປະທ້ວງ.

- ການເມືອງໄທ, ວັນທີ 20/03/2023 ໄດ້ຍຸບສະພາຜູ້ແທນຣາຊະດອນ ຕາມການສະເໜີຂອງ ທ່ານ ປະຢຸດ ຈັນໂອຊາ, ນາຍົກລັດຖະມົນຕີໄທ ເພື່ອຈັດການເລືອກຕັ້ງສະມາຊິກສະພາຜູ້ແທນຣາຊະດອນໃໝ່ ຈຳນວນ 500 ບ່ອນນັ່ງໃນສະພາ, ຄະນະກຳມະການການເລືອກຕັ້ງ ກໍໄດ້ຖະແຫຼງໂດຍກຳນົດເອົາວັນທີ 14/05/2023 ເປັນວັນເລືອກຕັ້ງທົ່ວໄປ ແລະ ວັນທີ 7/5/2023 ເປັນວັນເລືອກຕັ້ງລ່ວງໜ້າ; ມີການຮັບຮອງເຂດເລືອກຕັ້ງ ຈຳນວນ 400 ເຂດ ໃນທົ່ວປະເທດ. ຂະນະທີ່, ບັນດາພັກການເມືອງຕ່າງໆກໍໄດ້ສືບຕໍ່ລົງຫາສຽງ ແຕ່ມີ 7 ພັກ ທີ່ມີການແຂ່ງຂັນກັນຢ່າງດຸເດືອດຄື: 1) ພັກພະລັງປະຊາຣັດ, 2) ພັກເພື່ອໄທ, 3) ພັກພູມໃຈໄທ, 4) ພັກປະຊາທິປັດ, 5) ພັກກ້າວໄກ, 6) ພັກໄທສ້າງຊາດ ແລະ 7) ພັກໄທສ້າງໄທ.

- ວັນທີ 13/03/2023, ຟີລິບປິນ ແລະ ອາເມລິກາ ໄດ້ຊ້ອມຮົບປະຈຳປີຮ່ວມກັນພາຍໃຕ້ຫົວຂໍ້: Salaknib ທີ່ຖານທັບ Fort Magsaysay ຂອງຟີລິບປິນ ເປັນເວລາ 03 ອາທິດ ແລະ ມີທະຫານເຂົ້າຮ່ວມຫຼາຍກວ່າ 3.000 ຄົນ. ຖານທັບ Fort Magsaysay ເປັນຖານທັບທີ່ໃຫຍ່ທີ່ສຸດຂອງຟີລິບປິນ ແລະ ເປັນ 01 ໃນ 05 ຂອງຖານທັບທີ່ອາເມລິກາ ສາມາດເຄື່ອນໄຫວທາງການທະຫານຢູ່ຟີລິບປິນໄດ້ພາຍໃຕ້ຂໍ້ຕົກລົງການຮ່ວມມືທາງດ້ານປ້ອງກັນປະເທດທີ່ສອງຝ່າຍໄດ້ລົງນາມຮ່ວມກັນໃນປີ 2014, ຊຶ່ງຂໍ້ຕົກລົງດັ່ງກ່າວ ອະນຸຍາດໃຫ້ ອາເມລິກາ ສາມາດຝຶກຊ້ອມ ແລະປະຈຳການໄລຍະສັ້ນ, ແຕ່ບໍ່ອະນຸຍາດໃຫ້ ອາເມລິກາ ຕັ້ງຖານທັບຖາວອນຢູ່ໃນຟີລິບປິນ. ຂະນະທີ່, ສປ ຈີນ ໄດ້ຖະແຫຼງວ່າຂໍ້ຕົກລົງສະບັບນີ້ມີເປົ້າໝາຍປິດລ້ອມ ແລະ ຈຳກັດ ສປ ຈີນ.

- ຂະນະດຽວກັນ, ກອງທັບ ສປ ຈີນ ແລະ ກອງທັບກຳປູເຈຍ ໄດ້ຊ້ອມຮົບຮ່ວມກັນຢູ່ຖານທັບເຮືອ Ream ຂອງກຳປູເຈຍ ນັບຕັ້ງແຕ່ວັນທີ 20/03-08/04/2023, ເປັນຄັ້ງທີ 05 ປະກອບມີທະຫານເຂົ້າຮ່ວມຫຼາຍກວ່າ 3.000 ຄົນອາວຸດຍຸດໂທປະກອນຈຳນວນຫຼາຍ, ອຸປະກອນເກັບກູ້ລະເບີດ, ອຸປະກອນປ້ອງກັນພະຍາດ ແລະ ອື່ນໆ.

**2). ສະພາບການ ໃນຂົງເຂດເອີຣົບ-ອາເມຣິກາ**

ຄວາມຂັດແຍ່ງລະຫວ່າງອູແກຣນ ແລະ ລັດເຊຍ ໄດ້ກາຍເປັນວິກິດການທີ່ມີຜົນກະທົບໄລຍະຍາວຕໍ່ສະພາບເສດຖະກິດ ແລະ ການເມືອງຂອງໂລກ. ຊຶ່ງ ເປັນເວລາ 1 ປີກວ່າ ຂອງການປະຕິບັດການພິເສດທາງການທະຫານຂອງລັດເຊຍ ຢູ່ ອູແກຼນ ທີ່ມີອາເມລິກາ ແລະ ປະເທດຕາເວັນຕົກສະໜັບສະໜູນອູແກຣນນັ້ນ ຍັງບໍ່ມີທ່າອ່ຽງຈະຢຸດຕິລົງ, ການປະທະກັນລະຫວ່າງກຳລັງທະຫານຂອງລັດເຊຍ ແລະ ອູແກຼນ ຍັງເພີ່ມທະວີຄວາມຮຸນແຮງຂຶ້ນ ໂດຍສະເພາະໃນພາກຕາເວັນອອກຂອງອູແກຣນ. ຂະນະທີ່ ທ່ານ Vladimir Putin ຢືນຢັນວ່າ ລັດເຊຍຈະປະຕິບັດການພິເສດທາງທະຫານຕໍ່ໄປຈົນກວ່າຈະສາມາດປົດປ່ອຍແຄວ້ນ Donetsk ແລະ Luhansk ໄດ້. ທ່ານ Putin ຍັງໄດ້ລົງນາມໃນກົດໝາຍກ່ຽວກັບການໂຈະການເຂົ້າຮ່ວມສົນທິສັນຍາ ວ່າດ້ວຍການຈຳກັດອາວຸດນິວເຄຼຍ (New Start) ຊົ່ວຄາວ. ໃນເດືອນ 3/2023 ອູແກຣນ ແລະ ລັດເຊຍ ໄດ້ແລກປ່ຽນຊະເລີຍເສິກ ຈຳນວນ 220 ຄົນ, ໃນນີ້ສົ່ງສະເລີຍເສິກກັບຄືນລັດເຊຍ 90 ຄົນ.

ຕໍ່ຄວາມກັງວົນຕໍ່ສະຖານະການໃນອູແກຣນ, ວັນທີ 24/02/2023, ກະຊວງການຕ່າງປະເທດຈີນ ໄດ້ສະເໜີແຜນສັນຕິພາບຂອງ ສປ ຈີນ ເພື່ອເປັນແນວທາງໃນການແກ້ໄຂວິກິດການອູແກຣນ-ລັດເຊຍ ຜ່ານທາງການທູດ. ແຜນສັນຕິພາບດັ່ງກ່າວປະກອບດ້ວຍ 12 ຂໍ້, ຊຶ່ງມີເນື້ອໃນສຳຄັນຄື: 1) ເຄົາລົບອະທິປະໄຕຂອງທຸກປະເທດ; 2) ປະຖິ້ມແນວຄິດສົງຄາມເຢັນ; 3)ຢຸດຕິການເປັນປໍລະປັກກັນ; 4) ຟື້ນຟູການເຈລະຈາສັນຕິພາບ; 5) ແກ້ໄຂວິກິດການມະນຸດສະທຳ; 6) ປົກປ້ອງພົນລະເຮືອນ ແລະ ຊະເລີຍເສິກ; 7) ປົກປັກຮັກສາໂຮງງານໄຟຟ້ານິວເຄຼຍໃຫ້ປອດໄພ; 8) ຫຼຸດຜ່ອນຄວາມສ່ຽງຍຸດທະສາດ; 9)ອຳນວຍຄວາມສະດວກໃຫ້ແກ່ການສົ່ງອອກທັນຍາພືດ; 10) ຢຸດຕິການລົງໂທດຂວ້ຳບາດຝ່າຍດຽວ; 11) ຮັກສາຕ່ອງໂສ້ອຸດສະຫະກຳ ແລະ ຕ່ອງໂສ້ອຸປະທານໃຫ້ມີສະຖຽນລະພາບ ແລະ 12) ສົ່ງເສີມການຟື້ນຟູຫຼັງຄວາມຂັດແຍ່ງ.

ສ່ວນບັນດາປະເທດຕາເວັນຕົກ ຍັງສືບຕໍ່ຂວ້ຳບາດລັດເຊຍ ແລະ ໃຫ້ການສະໜັບສະໜູນດ້ານການເງິນ, ອາວຸດ ແລະ ການຝຶກແອບດ້ານການທະຫານ, ການແພດໃຫ້ອູແກຣນຢ່າງຕໍ່ເນື່ອງ. ອີຢູ ໄດ້ປະກາດຂວ້ຳບາດເພີ່ມຕື່ມ 96 ໜ່ວຍງານທີ່ຖືກກ່າວຫາວ່າພົວພັນກັບການສະໜອງສິນຄ້າໃຫ້ ລັດເຊຍ; ຂວ້ຳບາດສິ່ມວນຊົນຂອງລັດຖະບານລັດເຊຍໂດຍການໂຈະການອອກອາກາດຂອງສຳນັກຂ່າວ RT ແລະ Sputnik ພາກພາສາອາຣັບ ຢູ່ບັນດາປະເທດອີຢູ ແລະຂວ້ຳບາດໜ່ວຍງານຂອງອີຣານ 7 ແຫ່ງທີ່ຖືກກ່າວຫາວ່າກ່ຽວຂ້ອງກັບການສະໜອງໂດຣນໃຫ້ ລັດເຊຍ. ນອກຈາກນັ້ນ, ທ່ານ Faisal bin Farhan, ລັດຖະມົນຕີຕ່າງປະເທດອາຣັບບີ ຊາອຸດິດ ໄດ້ປະກາດສະໜັບສະໜູນອູແກຣນ 400 ລ້ານໂດລາ ໃນໂອກາດຢ້ຽມຢາມອູແກຣນ ວັນທີ 26 ກຸມພາ 2023 ຜ່ານມາ. ອາເມລິກາຈະສົ່ງລູກປືນໃຫຍ່ທີ່ມີມູນຄ່າ 350 ລ້ານໂດລາ ໃຫ້ ອູແກຣນ. EU ອະນຸມັດງົບປະມານ 2 ຕື້ເອີໂຣ ເພື່ອຈັດຊື້ລູກປືນໃຫຍ່ໃຫ້ອູແກຣນ. ໂປໂລຍ ແລະ ສະໂລວາກີ ຈະສົ່ງເຮືອບິນສູ້ຮົບຍຸກໂຊວຽດລຸ້ນ Mig-29 ໃຫ້ ອູແກຣນ ໂດຍທີ່ໂປໂລຍ ຈະສົ່ງໃຫ້ 12 ລຳ ແລະ ສະໂລວາກີ ຈະສົ່ງໃຫ້ 10 ລຳ. ສ່ວນ ເຢຍລະມັນ ກໍກຽມພ້ອມສົ່ງທະຫານ 3.000 - 5.000 ຄົນເຂົ້າປະຈຳການ ຢູ່ ລິດຕົວນີ ຫາກມີຄວາມຈຳເປັນ ເພື່ອປ້ອງກັນເຂດບານຕິກ ຕາມການຮຽກຮ້ອງຂອງບັນດາປະເທດບານຕິກ. ຂະນະທີ່, ວັນທີ 21/3/2023, ທ່ານ ຟູມິໂອະ ຄິຊິດະ, ນາຍົກລັດຖະມົນຕີຍີ່ປຸ່ນ ໄດ້ເດີນທາງຢ້ຽມຢາມ ອູແກຣນ ແລະ ປະກາດຈະຊ່ວຍເຫຼືອເພີ່ມຕື່ມແກ່ອູກຣນ. ນອກຈາກນັ້ນ, ຕາເວັນຕົກ ຍັງໄດ້ໃຊ້ສານອາຍາສາກົນ (ICC) ເພື່ອອອກໝາຍຈັບທ່ານ Vladimir Putin ໂດຍອ້າງວ່າ ທ່ານ ມີຄວາມຜິດກ່ຽວກັບການເນລະເທດເດັກນ້ອຍຈາກອູແກຣນ ຢ່າງຜິດກົດໝາຍ. ເຮັດໃຫ້ໂຄສົກທຳນຽບປະທານາທິບໍດີລັດເຊຍ ກ່າວວ່າ ລັດເຊຍ ກໍຄືລັດອື່ນໆບໍ່ຍອມຮັບອຳນາດຂອງສານດັ່ງກ່າວ ແລະ ລັດເຊຍ ບໍ່ແມ່ນສະມາຊິກສານອາຍາສາກົນດັ່ງກ່າວ.

ຕິດພັນກັບສະພາບການໃນອູແກຣນ, ນອກຈາກອາເມລິກາ ຈະປະເຊີນກັບກັບຄ່າຄອງຊີບ ແລະ ລາຄາພະລັງງານສູງແລ້ວ, ທະນາຄານຍັກໃຫຍ່ 3 ແຫ່ງຂອງອາເມລິກາ ຍັງລົ້ມລະລາຍ (ທະນາຄານ Silicon Valley (SVB), ທະນາຄານ Silvergate ແລະ ທະນາຄານ Signature), ທ່ານ Joe Biden ກ່າວວ່າຈະແກ້ໄຂວິກິດການທີ່ເກີດຂຶ້ນໂດຍໄວ, ຂໍໃຫ້ທຸກໆຫົວໜ່ວຍທຸລະກິດ ແລະ ປະຊາຊົນ ເຊື່ອໝັ້ນວ່າຈະໄດ້ຮັບການຄຸ້ມຄອງ ແລະ ຊົດເຊີຍ. ນອກນີ້, ທະນາຄານກາງອາເມລິກາ (Fed) ໄດ້ປະກາດກອງທຶນຊ່ວຍເຫຼືອ ເພື່ອສະກັດກັ້ນການແຫ່ຖອນເງິນສົດ ທີ່ຈະ

ສິ່ງຜົນກະທົບຕໍ່ສະຖຽນລະພາບຂອງລະບົບທະນາຄານ ແລະ ເສດຖະກິດຂອງອາເມລິກາ. ປັດຈຸບັນ, ບັນດາປະເທດໃນກຸ່ມ BRICS ແລະ ບັນດາປະເທດທີ່ຖືຄອງເງິນໂດລາສະຫະລັດ ພາກັນທະຍອຍຂາຍສະກຸນເງິນໂດລາອອກຈາກຄັງເງິນໃນປະເທດ.

**3). ການພົບປະຂອງຜູ້ນຳສາມຝ່າຍ ອົດສະຕຣາລີ, ອັງກິດ ແລະ ອາເມລິກາ ຫຼື AUKUS**

ວັນທີ 13/03/2023, ອາເມລິກາ ໄດ້ເປັນເຈົ້າພາບຈັດກອງປະຊຸມພົບປະຜູ້ນຳສາມຝ່າຍລະຫວ່າງ ທ່ານ Anthony Albanese, ນາຍົກລັດຖະມົນຕີອົດສະຕຣາລີ; ທ່ານ Rishi Sunak, ນາຍົກລັດຖະມົນຕີອັງກິດ ແລະ ທ່ານ Joe Biden, ປະທານາທິບໍດີອາເມລິກາ ຢູ່ຖານທັບເຮືອ Point Loma, ລັດ Carifornia. ສາມຝ່າຍເຫັນດີຮ່ວມກັນສ້າງໂຄງການພັດທະນາເຮືອດຳນ້ຳພະລັງງານນິວເຄຼຍ ຢູ່ ອົດສະຕຣາລີ ທີ່ມີມູນຄ່າ 368 ຕື້ໂດລາສະຫະລັດໃນໄລຍະ 03 ທົດສະວັດຕໍ່ໜ້າ. ພ້ອມດຽວກັນ, ອົດສະຕຣາລີ ຈະຊື້ເຮືອດຳນ້ຳພະລັງງານນິວເຄຼຍ 03 ລຳ ຈາກອາເມລິກາ. ທ່ານ Biden ກ່າວວ່າການຕັດສິນໃຈແບ່ງປັນເຕັກໂນໂລຊີຂັ້ນສູງຂອງອາເມລິກາ ໃຫ້ກັບອົດສະຕຣາລີ ແມ່ນການຕັດສິນໃຈທີ່ສຳຄັນ ແລະ ຈຳເປັນ ເພື່ອແນໃສ່ສ້າງຄວາມເຂັ້ມແຂງໃຫ້ກັບພັນທະມິດໃນຂົງເຂດອາຊີ-ປາຊີຟິກ.

ການພົບປະຂໍ້ຕົກລົງຂອງຜູ້ນຳ 3 ປະເທດດັ່ງກ່າວ, ຫຼາຍປະເທດ ແລະ ບຸກຄົນສຳຄັນ ໄດ້ສະແດງຄວາມຄິດເຫັນວ່າ ການທີ່ອົດສະຕຣາລີ ຊື້ເຮືອດຳນ້ຳພະລັງງານນິວເຄຼຍ ບໍ່ແມ່ນການພັດທະນາດ້ານເຕັກໂນໂລຊີ ແລະ ການປ້ອງກັນປະເທດ ຂອງອົດສະຕຣາລີ ແຕ່ເປັນການສວຍໃຊ້ຂອງ ອາເມລິກາໃນການປິດລ້ອມຈີນ ແລະ ເພື່ອຜົນປະໂຫຍດຂອງອາເມລິກາ ໃນພາກພື້ນອາຊີ-ປາຊີຟິກ.

**4). ສະພາບການ ໃນຂົງເຂດຕາເວັນອອກກາງ**

- ບາງປະເທດ ໃນຂົງເຂດນີ້ ຍັງປະເຊີນກັບບັນຫາປະຕິຮູບພາຍໃນ ເປັນຕົ້ນແມ່ນ ອິດສະລາແອນ, ຊຶ່ງມີປະຊາຊົນອິດສະລາແອນ ຫຼາຍກວ່າແສນຄົນ ເດີນຂະບວນປະທ້ວງໃນຂອບເຂດທົ່ວປະເທດ ເພື່ອຕໍ່ຕ້ານແຜນການປະຕິຮູບດ້ານຕຸລາການຂອງລັດຖະບານ ເປັນຕົ້ນແມ່ນຮ່າງກົດໝາຍ ວ່າດ້ວຍລັດຖະສະພາ ສາມາດລົບລ້າງຄຳຕັດສິນຂອງສານສູງສຸດໄດ້ດ້ວຍສຽງສ່ວນຫຼາຍ; ຮ່າງກົດໝາຍ ວ່າດ້ວຍໂຄງປະກອບຂອງຄະນະກຳມະທິການທີ່ແຕ່ງຕັ້ງຜູ້ພິພາກສາສູງສຸດ ໂດຍໃຫ້ຄະນະລັດຖະບານເປັນສຽງສ່ວນຫຼາຍ ແລະ ຮ່າງກົດໝາຍ ວ່າດ້ວຍການຈຳກັດສິດຂອງສານສູງສຸດບໍ່ສາມາດທົບທວນຄືນບັນດາກົດໝາຍທີ່ລັດຖະສະພາຮັບຮອງແລ້ວ. ຂະນະທີ່ທ່ານ Benjamin Netanyahu, ນາຍົກລັດຖະມົນຕີອິດສະຣາແອນ ກ່າວວ່າການປະຕິຮູບແມ່ນມີຄວາມຈຳເປັນ, ຊຶ່ງໄລຍະຜ່ານມາຕຸລາການມັກຈະແຊກແຊງເຂົ້າໃນບັນຫາການເມືອງທີ່ຄວນກຳນົດໂດຍລັດຖະສະພາ.

- ຄຽງຄູ່ກັນນັ້ນ, ຫຼາຍປະເທດ ແມ່ນໄດ້ເຄື່ອນໄຫວຕ່າງປະເທດ ເພື່ອຍົກສູງການຮ່ວມມືລະຫວ່າງກັນ, ຊຶ່ງວັນທີ 27/02/2023, ທ່ານ Sameh Shoukry, ລັດຖະມົນຕີຕ່າງປະເທດເອຢິບ ໄດ້ຢ້ຽມຢາມຊີຣີ ຢ່າງເປັນທາງການ, ຊຶ່ງເປັນຄັ້ງທຳອິດຂອງນັກການທູດລະດັບສູງຂອງເອຢິບ ນັບຕັ້ງແຕ່ປີ 2011. ທ່ານ Shoukry ໄດ້ກ່າວວ່າ ເອຢິບ ຍິນດີໃຫ້ການຊ່ວຍເຫຼືອຊີຣີ ທຸກດ້ານ ແລະ ຫວັງວ່າການຢ້ຽມຢາມຄັ້ງນີ້ຈະເປັນການເລີ່ມຕົ້ນຄັ້ງໃໝ່ຂອງການສົ່ງເສີມສາຍພົວພັນລະຫວ່າງສອງຊາດ. ສ່ວນ ອາເມລິກາ ໄດ້ສະແດງທ່າທີຂັດຄ້ານຕໍ່ການເຄື່ອນໄຫວຕ່າງໆຂອງບັນດາປະເທດອາຣັບທີ່ມີຕໍ່ການຟື້ນຟູສາຍພົວພັນກັບຊີຣີ.

- ວັນທີ 08/03/2023, ທ່ານ Lloyd Austin, ລັດຖະມົນຕີປ້ອງກັນປະເທດອາເມລິກາ ໄດ້ຢ້ຽມຢາມອີຣັກ ແລະ ພົບປະກັບ ທ່ານ Mohammed Al Sudani, ນາຍົກລັດຖະມົນຕີອີຣັກ. ທ່ານ Austin ກ່າວວ່າ ອາເມລິກາເຫັນດີສືບຕໍ່ສົ່ງເສີມການພົວພັນທາງດ້ານຍຸດທະສາດໃນການສະໜັບສະໜູນຄວາມໝັ້ນຄົງ, ສະຖຽນລະພາບຂອງອີຣັກ. ທ່ານ Sudani ກ່າວວ່າ ຈຸດຢືນຂອງລັດຖະບານອີຣັກ ຕໍ່ນະໂຍບາຍການຕ່າງປະເທດ ແມ່ນການຮັກສາສະຖຽນລະພາບໃນພາກພື້ນບົນພື້ນຖານການເຄົາລົບອະທິປະໄຕເຊິ່ງກັນ ແລະ ກັນ.

- ວັນທີ 10/03/2023, ອີຣານ ແລະ ອາຣັບບີ ຊາອຸດີ ໄດ້ຕົກລົງຈະກັບມາຟື້ນຟູຄືນສາຍພົວພັນທາງການທູດກັນ ໂດຍສອງຝ່າຍຈະເປີດສະຖານທູດ ແລະ ສຳນັກງານຄືນ ພາຍໃນ 02 ເດືອນ. ສອງປະເທດດັ່ງກ່າວ ໄດ້ສະແດງຄວາມຊົມເຊີຍຕໍ່ບົດບາດຂອງ ສປ ຈີນ ຕໍ່ການຟື້ນຟູສາຍພົວພັນຂອງສອງປະເທດ, ຊຶ່ງຮັກສາໄດ້ສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມືສາກົນໃນພາກພື້ນ. ການຟື້ນຟູສາຍພົວພັນຂອງສອງປະເທດດັ່ງກ່າວ ຖືເປັນຜົນດີຕໍ່ສອງປະເທດ ແລະ ຕໍ່ພາກພື້ນຕາເວັນອອກກາງ ໂດຍສະເພາະແມ່ນການສ້າງຄວາມເຂັ້ມແຂງໃຫ້ກຸ່ມປະເທດອຸດສາຫະກຳ

ໃໝ່ (BRICS( ເພາະທັງສອງປະເທດແມ່ນມີເຈດຈຳນົງເຂົ້າຮ່ວມກຸ່ມ BRICS ແລະ ເປັນປະເທດທີ່ຜະລິດນ້ຳມັນອັນດັບຕົ້ນໆຂອງໂລກ.

**ແຫຼ່ງຂ່າວອ້າງອີງ** :VNA, Vietnam News, Vietnam- Express, VNS, Xinhua, CNA, Global Times, The Japantimes, kpl, Yonhap, CRI, Jakata post, RT, BBC, CNN, AFP, NHK, Aljazeera, CGTN, Reuters, Nournews, TNN, Thai TBS, Top news, ກະຊວງການຕ່າງປະເທດລາວ, ກົມ ອປອ ຄຕພ, ກົມ ອອ ຄຕພ.

# II. ໂທລະເລກຊົມເຊີຍວັນສ້າງຕັ້ງພັກ ປປ ລາວ

### ໂທລະເລກຊົມເຊີຍວັນສ້າງຕັ້ງພັກ ປປ ລາວ ຄົບຮອບ 68 ປີ ຈາກພັກກອມມູນິດຫວຽດນາມ

ວັນທີ 21 ມີນາ 2023, ຄະນະບໍລິຫານງານສູນກາງ ພັກປະຊາຊົນ ປະຕິວັດລາວ ໄດ້ຮັບໂທລະເລກອວຍພອນເນື່ອງໃນໂອກາດ ວັນສ້າງຕັ້ງ ພັກປະຊາຊົນປະຕິວັດລາວ ຄົບຮອບ 68 ປີ ຈາກ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ເຊິ່ງ ໂທລະເລກອວຍພອນ ມີເນື້ອໃນວ່າ:

ເນື່ອງໃນໂອກາດວັນສ້າງຕັ້ງພັກປະຊາຊົນ ປະຕິວັດລາວ ຄົບຮອບ 68 ປີ (22/3/1955 – 22/3/2023), ຕາງໜ້າພັກກອມມູນິດຫວຽດນາມ ແລະ ປະຊາຊົນຫວຽດນາມ, ພວກຂ້າພະເຈົ້າ ຂໍສົ່ງເຖິງ ຄະນະບໍລິຫານງານສູນກາງພັກ ສະມາຊິກພັກປະຊາຊົນ ປະຕິວັດລາວ ແລະ ປະຊາຊົນລາວ ບັນດາເຜົ່າ ນ້ຳໃຈຖານສະຫາຍອ້າຍນ້ອງທີ່ສະໜິດສະໜົມ ແລະ ຄຳອວຍພອນໄຊອັນປະເສີດ ຢ່າງສຸດອົກສຸດໃຈ.

ຕະຫຼອດໄລຍະ 68 ປີຜ່ານມາ, ພິເສດໃນໄລຍະ 36 ປີ ການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່, ພາຍໃຕ້ການນຳພາອັນສ່ອງໃສຂອງ ພັກປະຊາຊົນ ປະຕິວັດລາວ, ປະຊາຊົນລາວອ້າຍນ້ອງ ໄດ້ເສີມຂະຫຍາຍມູນເຊື້ອວິລະຊົນປະຕິວັດ, ຜ່ານຜ່າຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍນາໆປະການ, ຍາດໄດ້ຜົນສຳເລັດອັນໃຫຍ່ຫຼວງ, ມີຄວາມໝາຍປະຫວັດສາດ ໃນບັນດາຂົງເຂດຕ່າງໆ, ຍົກສູງຖານະບົດບາດຂອງພັກປະຊາຊົນ ປະຕິວັດລາວ ແລະ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ໃນເວທີສາກົນ. ບັນດາຜົນສຳເລັດດັ່ງກ່າວນັ້ນ ເປັນຄວາມປິຕິຊົມຊື່ນລວມຂອງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດພວກເຮົາ.

ພັກ, ລັດຖະບານ ແລະ ປະຊາຊົນຫວຽດນາມ ສະໜັບສະໜູນຢ່າງແຂງແຮງ ແລະ ຮອບດ້ານ ຕໍ່ພາລະກິດປ່ຽນແປງໃໝ່ຂອງລາວ ແລະ ເຊື່ອໝັ້ນວ່າ ໂດຍການສືບທອດມູນເຊື້ອຂອງບັນດາຄົນຮຸ່ນກ່ອນ ແລະ ເສີມຂະຫຍາຍບັນດາຜົນສຳເລັດທີ່ຍາດມາໄດ້, ພາຍໃຕ້ການນຳພາຂອງ ພັກປະຊາຊົນ ປະຕິ ວັດລາວ, ປະເທດຊາດ ແລະ ປະຊາຊົນລາວ ອ້າຍນ້ອງ ຈະສືບຕໍ່ຍາດໄດ້ຜົນສຳເລັດອັນໃໝ່, ໃຫຍ່ຫຼວງກວ່າເກົ່າ ໃນພາລະກິດປ່ຽນແປງໃໝ່, ຈັດຕັ້ງປະຕິບັດບັນດາເປົ້າໝາຍທີ່ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ ແລະ ແຜນການພັດທະນາເສດຖະກິດ-ສັງຄົມ ໄລຍະ 5 ປີ ເທື່ອທີ 9 ວາງອອກ ໄດ້ຢ່າງມີໄຊ; ສ້າງ ສປປ ລາວ ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ ຕາມທິດສັງຄົມນິຍົມ ສຳເລັດຜົນຢ່າງຈົບງາມ.

ພວກຂ້າພະເຈົ້າ, ມີຄວາມປິຕິຊົມຊື່ນເປັນຢ່າງຍິ່ງ ທີ່ເຫັນວ່າ ຄຽງຄູ່ກັບບັນດາຜົນງານຂອງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ຍາດມາໄດ້ຕະຫຼອດໄລຍະຜ່ານມາ, ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ຫວຽດນາມ-ລາວ ໂດຍແມ່ນ ປະທານ ໂຮ່ຈິມິນ ຜູ້ນຳທີ່ຍິ່ງໃຫຍ່ ແລະ ປະທານ ໄກສອນ ພົມວິຫານ, ປະທານ ສຸພານຸວົງ ທີ່ແສນເຄົາລົບຮັກ ເປັນຜູ້ກໍ່ຕັ້ງ, ຝຶກຝົນຫຼໍ່ຫຼອມ ແລະ ບັນດາຮຸ່ນການນຳ ພັກ, ລັດ ແລະ ປະຊາຊົນສອງຊາດ ສືບຕໍ່ໄດ້ຮັບການເພີ່ມພູນຄູນສ້າງ ແລະ ນັບມື້ໄດ້ຮັບການຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ແລະ ມີປະສິດທິຜົນໃນທຸກຂົງເຂດ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນພາລະກິດປ່ຽນແປງໃໝ່, ປົກປັກຮັກສາ ແລະ ພັດທະນາ ຢູ່ແຕ່ລະປະເທດ.

ພັກ, ລັດຖະບານ ແລະ ປະຊາຊົນຫວຽດນາມ ຍາມໃດກໍ່ຖືສຳຄັນ ແລະ ຈາລຶກໄວ້ສະເໝີ ການສະໜັບສະໜູນຢ່າງເຂັ້ມແຂງ, ການຊ່ວຍເຫຼືອອັນໃຫຍ່ຫຼວງ, ລ້ຳຄ່າ, ມິດຈິດມິດໃຈອັນບໍລິສຸດຜຸດຜ່ອງ ແລະ ມີປະສິດທິຜົນຂອງ

ພັກ, ລັດຖະບານ ແລະ ປະຊາຊົນລາວອ້າຍນ້ອງ ໃຫ້ແກ່ ພັກ, ລັດຖະບານ ແລະ ປະຊາຊົນຫວຽດນາມ ຕະຫຼອດໄລຍະທີ່ຜ່ານມາ. ພວກຂ້າພະເຈົ້າ ຈະເຮັດສຸດຄວາມສາມາດຂອງຕົນ ຮ່ວມກັບ ພັກ, ລັດຖະບານ ແລະ ປະຊາຊົນລາວ ປົກປັກຮັກສາ, ຖະນຸຖະໜອມ ແລະ ເພີ່ມພູນຄູນສ້າງ ສາຍພົວພັນມິດຕະພາບ ຄວາມສາມັກຄີພິເສດ ຫວຽດນາມ-ລາວ ໃຫ້ນັບມື້ຂະຫຍາຍຕົວຂຶ້ນສູ່ລະດັບໃໝ່, ເພື່ອຜົນປະໂຫຍດຂອງປະຊາຊົນແຕ່ລະປະເທດ, ເພື່ອສັນຕິພາບ, ສະຖຽນລະພາບ, ການຮ່ວມມື ແລະ ພັດທະນາຢູ່ໃນຂົງເຂດ ແລະ ໃນໂລກ.

ອວຍພອນໃຫ້ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ຫວຽດນາມ-ລາວ ຈົ່ງສວຍສົດງົດງາມ ແລະ ໝັ້ນຄົງທະນົງແກ່ນ ຕະຫຼອດການະນານ.

ໂອກາດນີ້, ສະຫາຍ ເລ ຮວາຍ ຈຸງ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ກໍໄດ້ສົ່ງໂທລະເລກອວຍພອນເຖິງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນ ປະຕິວັດລາວ ເຊັ່ນດຽວກັນ.

## ໂທລະເລກຊົມເຊີຍວັນສ້າງຕັ້ງພັກ ປປ ລາວ ຄົບຮອບ 68 ປີ ຈາກພັກແຮງງານເກົາຫຼີ

ສະຫາຍ ກິມ ເຈິງ ອຸນ, ເລຂາທິການໃຫ່ຍພັກແຮງງານເກົາຫຼີ, ປະທານກິດຈະການແຫ່ງລັດ ແຫ່ງສາທາລະນະລັດ ປະຊາຊົນ ປະຊາທິປະໄຕ ເກົາຫຼີ ໄດ້ສົ່ງໂທລະເລກຊົມເຊີຍ ເຖິງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ, ປະທານປະເທດ ແຫ່ງ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ເນື່ອງໃນໂອກາດ ວັນສ້າງຕັ້ງພັກປະຊາຊົນ ປະຕິວັດລາວ ຄົບຮອບ 68 ປີ, ຊຶ່ງມີເນື້xໃນສຳຄັນ: ຂ້າພະເຈົ້າ ຂໍສົ່ງຄຳຊົມເຊີຍອັນອົບອຸ່ນ ແລະ ຄວາມຢື້ຢາມຖາມຂ່າວຖານສະຫາຍ ມາຍັງ ສະຫາຍເລຂາທິການໃຫ່ຍ ແລະ ສະມາຊິກພັກທຸກຖ້ວນໜ້າຂອງ ພັກປະຊາຊົນ ປະຕິວັດລາວ.

ຕະຫຼອດໄລຍະ 68 ປີ ຜ່ານມາ ແຫ່ງການສ້າງຕັ້ງ, ພັກປະຊາຊົນ ປະຕິວັດລາວ ໄດ້ຜ່ານຜ່າຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍນາໆປະການຈາກພາຍໃນ ແລະ ພາຍນອກ ຢ່າງເດັດດ່ຽວໜຽວແໜ້ນ ແລະ ຈັດຕັ້ງນຳພາການຕໍ່ສູ້ຂອງປະຊາຊົນລາວ ເພື່ອຄວາມເປັນເອກະລາດ, ການພັດທະນາ ແລະ ຄວາມຈະເລີນຮຸ່ງເຮືອງຂອງປະເທດຊາດ ຢ່າງມີໄຊ.

ໃນປັດຈຸບັນນີ້, ພາຍໃຕ້ການຊີ້ນຳ-ນຳພາອັນຖືກຕ້ອງຂອງພັກປະຊາຊົນ ປະຕິວັດລາວ ຊຶ່ງມີ ສະຫາຍເລຂາທິການໃຫ່ຍເປັນຜູ້ນຳ, ປະຊາຊົນລາວ ມີຄວາມກ້າວໜ້າອັນໃໝ່ໃນການຕໍ່ສູ້ ເພື່ອຈັດຕັ້ງຜັນຂະຫຍາຍບັນດາມະຕິຂອງກອງປະຊຸມໃຫ່ຍ ຄັ້ງທີ 11 ຂອງພັກ.

ຂ້າພະເຈົ້າ ຂໍອວຍພອນໄຊ ມາຍັງ ສະຫາຍເລຂາທິການໃຫຍ່ ຈົ່ງມີຜົນສຳເລັດອັນໃຫຍ່ຫຼວງກ່ວາເກົ່າ ໃນໜ້າທີ່ວຽກງານອັນມີຄວາມຮັບຜິດຊອບຂອງສະຫາຍ ເພື່ອເສີມຂະຫຍາຍ ພັກປະຊາຊົນ ປະຕິວັດລາວ ໃຫ້ມີຄວາມເຂັ້ມແຂງ, ຄວາມສະຫວັດດີພາບຂອງປະຊາຊົນລາວ ແລະ ສະແດງຄວາມເຊື່ອໝັ້ນ ຢ່າງໜັກແໜ້ນວ່າ ສາຍພົວພັນມິດຕະພາບ ແລະການຮ່ວມມືອັນເປັນມູນເຊື້ອ ໃນຖານສະຫາຍຂອງ ສອງພັກ, ສອງປະເທດພວກເຮົາ ຈະໄດ້ຮັບການເສີມຂະຫຍາຍ ຢ່າງບໍ່ຢຸດຢັ້ງ ໃນອະນາຄົດ.

# III. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

## 1. ຄະນະພົວພັນຕ່າງປະເທດສູນກາງພັກ ປະກາດການຈັດຕັ້ງ




ວັນທີ 01 ມີນາ 2023, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດພິທີປະກາດພະນັກງານຂອງຕົນ ອອກພັກຜ່ອນ-ຮັບອຸດໜູນບຳນານ ແລະ ປະກາດຕຳແໜ່ງບໍລິຫານຂັ້ນຫົວໜ້າກົມ, ໃຫ້ກຽດເປັນປະທານໂດຍ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ; ມີບັນດາສະຫາຍຄະນະພັກ-ຄະນະນຳ, ຄະນະກົມ ພາຍໃນຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມ. ໃນພິທີ ສະຫາຍ ວາລະໄຊ ເລັ່ງສະຫວັດ, ກຳມະການຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຜ່ານມະຕິຕົກລົງຂອງຄະນະເລຂາທິການສູນກາງພັກວ່າດ້ວຍການອະນຸມັດໃຫ້ສະຫາຍ ນາງ ພອນດາວັນ ພົນສະຫວັນ, ຫົວໜ້າກົມຈັດຕັ້ງ-ພະນັກງານ ອອກພັກການ-ຮັບອຸດໜູນບຳນານ ແລະ ຜ່ານຂໍ້ຕົກລົງຂອງ ຫົວໜ້າ ຄຕພ ວ່າດ້ວຍການອະນຸມັດໃຫ້ ສະຫາຍ ຈັນທະວິສຸກ ຈັນທະສານ, ຮອງຫົວໜ້າຫ້ອງການ ຄຕພ ອອກພັກການ-ຮັບອຸດໜູນບຳນານ. ພ້ອມທັງຜ່ານມະຕິຕົກລົງຂອງຄະນະເລຂາທິການສູນກາງພັກວ່າດ້ວຍການແຕ່ງຕັ້ງ ສະຫາຍ ບຸນຍະເດດ ໄຊຍະວົງ ເປັນຫົວໜ້າຫ້ອງການ ຄຕພ; ແຕ່ງຕັ້ງ ສະຫາຍ ເກິລ່ ຢາງກໍ່ ເປັນຫົວໜ້າກົມຈັດຕັ້ງ-ພະນັກງານ; ແຕ່ງຕັ້ງ ສະຫາຍ ນາງ ສິຣິພອນ ຄູຫາເທບ ເປັນຫົວໜ້າກົມເອີຣົບ-ອາເມຣິກາ; ແລະ ແຕ່ງຕັ້ງ ສະຫາຍ ບຸນຍອງ ບຸດທະວົງ ເປັນຫົວໜ້າກົມການທູດປະຊາຊົນ. ໂອກາດດັ່ງກ່າວ, ສະຫາຍ ທອງສະຫວັນ ພົມວິຫານ ໄດ້ໂອ້ລົມຕໍ່ພະນັກງານບຳນານໂດຍໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານ ແລະ ຜົນສຳເລັດໃນການປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ກໍຄືວຽກງານລວມຂອງ ຄະນະພົວພັນຕ່າງປະເທດສູນກາງພັກຕະຫລອດໄລຍະຜ່ານມາ. ພ້ອມທັງສະເໜີໃຫ້ຖ່າຍທອດບົດຮຽນໃຫ້ແກ່ພະນັກງານຮຸ່ນສືບທອດ, ສືບຕໍ່ດຳເນີນຊີວິດການເມືອງໃນໜ່ວຍພັກໃຫ້ເປັນປົກກະຕິ, ໃຫ້ສືບຕໍ່ເປັນແບບຢ່າງທີ່ດີໃນການດຳລົງຊີວິດໃນສັງຄົມ, ສ້າງເສດຖະກິດຄອບຄົວຖືກຕ້ອງຕາມກົດໝາຍ; ສຳລັບພະນັກງານທີ່ໄດ້ຮັບການເລື່ອນຕຳແໜ່ງບໍລິຫານໃຫ້ເອົາໃຈໃສ່ປະຕິບັດເນື້ອໃນຂໍ້ແຂ່ງຂັນ 05ປີ ໃນຕໍ່ໜ້າ (2021-2025); ນຳພາກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ; ເອົາໃຈໃສ່ປະຕິບັດໜ້າທີ່ການເມືອງຕາມພາລະບົດບາດ ຮັບປະກັນການເປັນເສນາທິການໃຫ້ແກ່ຂັ້ນເທິງໃນວຽກງານຈັດຕັ້ງ-ພະນັກງານ, ພົວພັນຕ່າງປະເທດດ້ານພັກ ແລະ ການທູດປະຊາຊົນໃນໄລຍະໃໝ່.

## 2. ກອງປະຊຸມວຽກງານຈັດຕັ້ງ ແລະ ວຽກງານ ກວດກາ ປະຈຳປີ 2022




ວັນທີ 16 ມີນາ 2023, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດກອງປະຊຸມສະຫຼຸບວຽກງານຈັດຕັ້ງ ແລະ ວຽກງານກວດກາ ປະຈຳປີ 2022 ແລະ ວາງທິດທາງແຜນການ ໃນປີ 2023 ພາຍໃຕ້ການເປັນປະທານຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ມີບັນດາສະຫາຍໃນຄະນະພັກ, ຄະນະກົມ ແລະ ພະນັກງານ-ສະມາຊິກພັກ ພາຍໃນຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມທັງໝົດ 100 ກວ່າຄົນ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ໃຫ້ກຽດເຜີຍແຜ່ເນື້ອໃນຈິດໃຈຂອງກອງປະຊຸມວຽກງານກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງ ທົ່ວປະເທດ ຄັ້ງທີ XI; ສະຫາຍ ສົມພອນ ສີຈະເລີນ, ຮອງເລຂາຄະນະພັກ, ຮອງຫົວໜ້າ ຄຕພ, ປະທານກວດກາຄະນະພັກ ໃຫ້ກຽດເຜີຍແຜ່ເນື້ອໃນກອງປະຊຸມວຽກງານກວດກາ ທົ່ວປະເທດ ຄັ້ງທີ IV ເພື່ອໃຫ້ພະນັກງານ-ລັດຖະກອນ ຂອງ ຄຕພ ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ໂດຍຖືເອົາວຽກງານກວດກາເປັນວຽກໜຶ່ງທີ່ສຳຄັນໄປຄຽງຄູ່ກັບການນຳພາ-ຊີ້ນຳເຄື່ອນໄຫວວຽກງານຕາມພາລະບົດບາດ, ຂອບເຂດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບ ແລະ ນຳເອົາເນື້ອໃນຈິດໃຈຂອງ ສອງກອງປະຊຸມດັ່ງກ່າວ ໄປຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຕົວຈິງ ຢູ່ບັນດາໜ່ວຍພັກ, ບັນດາກົມ ໃຫ້ໄດ້ຮັບຜົນສຳເລັດ.

ຫຼັງຈາກນັ້ນກອງປະຊຸມ ຍັງໄດ້ຮັບຟັງການຜ່ານບົດສະຫຼຸບວຽກງານຈັດຕັ້ງ ແລະ ວຽກງານກວດກາ ປະຈຳປີ 2022 ແລະ ທິດທາງໃນປີ 2023 ຂອງ ຄຕພ ສະເໜີໂດຍ ສະຫາຍ ເກີລໍ່ ຢາງກໍ່, ກຳມະການຄະນະພັກ, ຮອງປະທານກວດກາພັກ, ຫົວໜ້າກົມຈັດຕັ້ງ-ພະນັກງານ, ໄດ້ຍົກໃຫ້ເຫັນຜົນງານດ້ານດີ ທີ່ຈະໄດ້ເສີມຂະຫຍາຍ, ດ້ານອ່ອນຄົງຄ້າງ ທີ່ຈະຕ້ອງໄດ້ປັບປຸງແກ້ໄຂ, ສາເຫດ ແລະ ບົດຮຽນທີ່ຖອດຖອນໄດ້. ຄະນະພັກ ໄດ້ເອົາໃຈໃສ່ວຽກງານສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກພັກ-ພະນັກງານ ໂດຍໄດ້ຈັດຕັ້ງເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ລະບຽບ, ກົດໝາຍຂອງລັດ, ບັນດາມະຕິ, ຄຳສັ່ງ ຂອງຂັ້ນເທິງວາງອອກ ລວມທັງໝົດ 07 ຄັ້ງ, ມີພະນັກງານເຂົ້າຮ່ວມ 583 ກວ່າເທື່ອຄົນ, ເປັນຍິງ 179 ກວ່າເທື່ອຄົນ; ໄດ້ເອົາໃຈໃສ່ນຳພາ-ຊີ້ນຳຕໍ່ການປັບປຸງການຈັດຕັ້ງໃຫ້ສອດຄ່ອງຕາມນິຕິກຳ ທີ່ຂັ້ນເທິງວາງອອກ; ໄດ້ສຳເລັດແຜນກຳນົດພະນັກງານນຳພາຄຸ້ມຄອງ ຂັ້ນ ຄຕພ ຄຸ້ມຄອງ ແລະ ສູນກາງຄຸ້ມຄອງ; ໄດ້ເອົາໃຈໃສ່ຊີ້ນຳຄະນະກວດກາ ແຕ່ລະຂັ້ນເຄື່ອນໄຫວ ຕິດຕາມ, ກວດກາການຈັດຕັ້ງປະຕິບັດພາລະບົດບາດຂອງ ຄະນະໜ່ວຍພັກ, ການກໍ່ສ້າງໜ່ວຍພັກ ປອດໃສ, ເຂັ້ມແຂງ, ໜັກແໜ້ນ; ຕິດຕາມການເຄື່ອນໄຫວ 3 ອົງການຈັດຕັ້ງມະຫາຊົນ, ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ແລະ ປະຕິບັດຂໍ້ແຂ່ງຂັນຮັກຊາດ-ພັດທະນາ ທີ່ຕິດພັນກັບວຽກງານວິຊາສະເພາະ ຂອງ ຄຕພ.

### 3. ກອງປະຊຸມປາຖະກະຖາ ວັນສຳຄັນຂອງພັກ, ຂອງຊາດ




ວັນທີ 21 ມີນາ 2023, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດພິທີເຜີຍແຜ່ເອກະສານ ເຊັ່ນ: ວັນຄຽດແຄ້ນສັດຕູຜູ້ຮຸກຮານຂອງປະຊາຊົນລາວ, ວັນລະນຶກນັກຮົບເສຍອົງຄະ ແລະ ສະຫຼະຊີວິດເພື່ອປະເທດຊາດ ຄົບຮອບ 77 ປີ (21.03.1946-21.03.2023); ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 68 ປີ (22.03.1955-22.03.2023); ວັນສ້າງຕັ້ງອົງການກວດກາພັກ-ລັດ ສ ປປ ລາວ ຄົບຮອບ 41 ປີ (16.02.1982-16.02.2023) ແລະ ຄຳສັ່ງແນະນຳເລກທີ 169/ຄລສພ, ລົງວັນທີ 15.08.2022 ກ່ຽວກັບ ການເພີ່ມທະວີການນຳພາ-ຊີ້ນຳຕໍ່ການເຄື່ອນໄຫວວຽກງານກວດກາ ແລະ ແກ້ໄຂພົນການກວດກາ. ໃຫ້ກຽດເຜີຍແຜ່ ແລະ ເປັນປະທານໂດຍ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ມີບັນດາຄະນະພັກ, ຄະນະກົມ, ພະແນກ ແລະ ພະນັກງານທົ່ວຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມ ຈຳນວນ 110 ສະຫາຍ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ຍົກໃຫ້ເຫັນເຖິງການຕໍ່ສູ້ຂອງປະຊາຊົນລາວບັນດາເຜົ່າຕ້ານພວກລ່າເມືອງຂຶ້ນຝຣັ່ງ ນັບແຕ່ປີ 1930 ເປັນຕົ້ນມາເວົ້າລວມ, ເວົ້າສະເພາະແມ່ນບັ້ນຮົບປ້ອງກັນເມືອງທ່າແຂກດ້ວຍການຕໍ່ສູ້ຢ່າງພິລະອາດຫານຂອງທະຫານ ແລະ ປະຊາຊົນເມືອງທ່າແຂກ ແຂວງຄຳມ່ວນ ຕໍ່ການກະທຳທີ່ໄຮ້ມະນຸດສະທຳ ແລະ ໂຫດຮ້າຍປ່າເຖື່ອນຂອງຈັກກະພັດ ໃນເດືອນ ມີນາ ປີ 1946 ເຊິ່ງນຳພາການຕໍ່ສູ້ໂດຍ ປະທານ ສຸພານຸວົງ. ຈຶ່ງຖືເອົາວັນທີ 21 ມີນາ 1946 ເປັນວັນຄຽດແຄ້ນຂອງປະຊາຊົນລາວຕໍ່ສັດຕູຜູ້ຮຸກຮານ; ພ້ອມນີ້, ພັກ-ລັດ ຍັງໄດ້ກຳນົດເອົາວັນທີ 21 ມີນາ ເປັນວັນລະນຶກ ວັນນັກຮົບເສຍອົງຄະ ແລະ ເສຍສະຫຼະຊີວິດເພື່ອປະເທດຊາດ ນັບແຕ່ປີ 2014 ເປັນຕົ້ນມາ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ເລົ່າມູນເຊື້ອການກຳເນີດ ແລະ ການຂະຫຍາຍຕົວຂອງພັກປະຊາຊົນປະຕິວັດລາວຕະຫຼອດໄລຍະ 68 ປີຜ່ານມາ, ເຊິ່ງສະຫາຍ ໄດ້ຍົກໃຫ້ເຫັນການກຳເນີດ, ທາດແທ້ ແລະ ອຸດົມການຂອງພັກ, ພົນງານທີ່ຍາດມາໄດ້ນັບແຕ່ໄລຍະນຳພາປົດປ່ອຍປະເທດຊາດ, ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ແລະ ເຫັນໄດ້ວ່າ ສປປ ລາວ ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ, ເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງ ດີຂຶ້ນຢ່າງຈະແຈ້ງ.

ຫຼັງຈາກນັ້ນ, ສະຫາຍ ສົມພອນ ສີຈະເລີນ, ຮອງເລຂາຄະນະພັກ, ປະທານກວດກາ, ຮອງຫົວໜ້າ ຄຕພ ໄດ້ສືບຕໍ່ເຜີຍແຜ່ເອກະສານວັນສ້າງຕັ້ງອົງການກວດກາພັກ-ລັດ ສປປ ລາວ ຄົບຮອບ 41 ປີ ແລະ ຄຳສັ່ງແນະນຳເລກທີ 169/ຄລສພ ວ່າດ້ວຍການເພີ່ມທະວີການນຳພາ-ຊີ້ນຳຕໍ່ການເຄື່ອນໄຫວວຽກງານກວດກາ ແລະ ແກ້ໄຂຜົນການກວດກາ ເຊິ່ງສະຫາຍ ໄດ້ຍົກໃຫ້ເຫັນຄວາມໝາຍຄວາມສຳຄັນໃນຂະບວນວິວັດແຫ່ງການເຕີບໃຫຍ່ຂະຫຍາຍຕົວໃນວຽກງານກວດກາຂອງພັກ ປປ ລາວຕະຫຼອດໄລຍະ 41 ປີຜ່ານມາ ເຮັດໃຫ້ພັກ ປປ ລາວ ສາມາດຮັກສາໄດ້ບົດບາດການນຳພາມີຄວາມປອດໃສ, ໜັກແໜ້ນ ແລະ ເຂັ້ມແຂງຂຶ້ນເລື້ອຍໆ ພ້ອມທັງຍົກໃຫ້ເຫັນດ້ານອ່ອນ-ຂໍ້ຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງເພື່ອແກ້ໄຂໃນຕໍ່ໜ້າ.

**4. ຫົວໜ້າ ຄຕພ ຕ້ອນຮັບທູດຫວຽດນາມ ເຂົ້າອວຍພອນວັນສ້າງຕັ້ງພັກ ປປ ລາວ ຄົບຮອບ 68 ປີ**



ວັນທີ 17 ມີນາ 2023, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນ ປະຕິວັດລາວ ໄດ້ຕ້ອນຮັບ ສະຫາຍ ຫງວຽນບ໋າຮຸ່ງ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ ພ້ອມດ້ວຍພະນັກງານຂອງສະຖານທູດ ເຂົ້າອວຍພອນເນື່ອງໃນໂອກາດວັນສ້າງຕັ້ງພັກປະຊາຊົນ ປະຕິວັດລາວ ຄົບຮອບ 68 ປີ.

ສະຫາຍ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຂອບໃຈຕໍ່ສະຫາຍ ຫງວຽນບ໋າຮຸ່ງ ພ້ອມດ້ວຍຄະນະ ທີ່ມາອວຍພອນ ໃນໂອກາດວັນສ້າງຕັ້ງພັກປະຊາຊົນ ປະຕິວັດລາວ ຊຶ່ງເປັນການສະແດງເຖິງການຖືສຳຄັນ ແລະ ມິດຈິດມິດໃຈແຫ່ງການພົວພັນມິດຕະພາບອັນເປັນມູນເຊື້ອ, ຄວາມສາມັກຄີພິເສດ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ກໍຄື ລະຫວ່າງ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ສະຖານເອກອັກຄະລັດຖະທູດຫວຽດນາມ ແລະ ໄດ້ກ່າວວ່າ ພັກປະຊາຊົນ ປະຕິວັດລາວ ແລະ ພັກກອມມູນິດຫວຽດນາມ ມີຕົ້ນກຳເນີດຈາກພັກກອມມູນິດອິນດູຈີນ, ຕະຫຼອດໄລຍະ 68 ປີ ແຫ່ງການກຳເນີດ ແລະ ເຕີບໃຫຍ່ເຂັ້ມແຂງ, ພັກປະຊາຊົນ ປະຕິວັດລາວ ໄດ້ແບກຫາບພາລະກຳປະຫວັດສາດ ເຮັດສຳເລັດພາລະກິດປົດປ່ອຍປະເທດຊາດ, ສືບຕໍ່ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ສູ່ຈຸດໝາຍສັງຄົມນິຍົມ. ເຖິງວ່າຈະໄດ້ຮັບການກະທົບຈາກການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19, ຜົນກະທົບຈາກສະພາບການພາກພື້ນ ແລະ ສາກົນ, ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ. ແຕ່ພັກ, ລັດຖະບານລາວ ກໍ່ໄດ້ມີຄວາມພະຍາຍາມສູງໃນການແກ້ໄຂບັນຫາເທື່ອລະກ້າວ, ຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ໄດ້ຮັບການປັບປຸງດີຂຶ້ນ. ສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນຢ່າງເລິກເຊິ່ງຕໍ່ພັກ, ລັດ ແລະ ປະຊາຊົນ ຫວຽດນາມ ອ້າຍນ້ອງ ທີ່ໄດ້ໃຫ້ການຊ່ວຍເຫຼືອອັນໃຫຍ່ຫຼວງ, ລ້ຳຄ່າ, ທັນການ ແລະ ມີປະສິດທິ

ຜົນແກ່ພາລະກິດຕໍ່ສູ້ກູ້ຊາດໃນເມື່ອກ່ອນ ກໍຄື ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນປັດຈຸບັນຂອງປະຊາຊົນລາວ.

ຕອນທ້າຍ, ສອງຝ່າຍຕ່າງກໍຕີລາຄາສູງຕໍ່ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ສືບຕໍ່ໄດ້ຮັບການເພີ່ມພູນຄູນສ້າງ ແລະ ເສີມຂະຫຍາຍດ້ວຍທ່ວງທ່າທີ່ຕັ້ງໜ້າ ນັບມື້ກ້າວເຂົ້າສູ່ລ່ວງເລິກໃນທຸກຂົງເຂດວຽກງານ ແລະ ມີປະສິດທິຜົນ ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ລາວ-ຫວຽດນາມ.

**5. ຄະນະຜູ້ແທນ ຂອງ ພັກ ປປ ລາວ ເຂົ້າຮ່ວມກອງປະຊຸມສົນທະນາລະດັບສູງລະຫວ່າງ ພັກກອມມູນິດຈີນ ກັບ ບັນດາພັກການເມືອງຕ່າງປະເທດ ຜ່ານວີດີໂອທາງໄກ**




ວັນທີ 15 ມີນາ 2023 ທີ່ຄະນະພົວພັນຕ່າງປະເທດສູນກາງພັກ, ຄະນະຜູ້ແທນ ພັກປະຊາຊົນ ປະຕິວັດລາວ ນຳໂດຍ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ເຂົ້າຮ່ວມກອງປະຊຸມເວທີສົນທະນາແລກປ່ຽນລະດັບສູງ ລະຫວ່າງ ພັກກອມມູນິດຈີນ ກັບ ບັນດາພັກການເມືອງທົ່ວໂລກ ທີ່ພັກກອມມູນິດຈີນ ເປັນເຈົ້າພາບຈັດຜ່ານລະບົບວີດີໂອທາງໄກ ພາຍໃຕ້ຫົວຂໍ້ "**ເສັ້ນທາງກ້າວໄປສູ່ການຫັນເປັນທັນສະໄໝ : ຄວາມຮັບຜິດຊອບຂອງພັກການເມືອງ**", ເຊິ່ງມີບັນດາພັກການເມືອງ, ອົງການການເມືອງ ແລະ ບັນດາຄັງປັນຍາໃນທົ່ວໂລກ ເຂົ້າຮ່ວມລວມ 530 ອົງການ. ໃນກອງປະຊຸມ, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດຈີນ ໄດ້ເຂົ້າຮ່ວມ ແລະ ມີຄຳເຫັນເປີດກອງປະຊຸມ, ໂດຍໄດ້ຍົກໃຫ້ເຫັນບົດຮຽນ ແລະ ຜົນສຳເລັດຂອງ ພັກ, ລັດ ແລະ ປະຊາຊົນຈີນ ໃນຂະບວນວິວັດແຫ່ງການສ້າງຮູບແບບການຫັນເປັນທັນສະໄໝແບບຈີນ; ໃຫ້ການສະໜັບສະໜູນຊຸກຍູ້ບັນດາພັກການເມືອງກໍຄືບັນດາປະເທດໃນໂລກ ສ້າງຮູບແບບການຫັນເປັນທັນສະໄໝທີ່ສອດຄ່ອງກັບສະພາບການຕົວຈິງຂອງຕົນ; ສະຫາຍ ສີ ຈິ້ນຜິງ ຍັງໄດ້ສະເໜີອອກ "ຂໍ້ລິເລີ່ມ ວ່າດ້ວຍອາລິຍະທຳທົ່ວໂລກ" ທີ່ຈະເປັນການຊຸກຍູ້ຂະບວນການຫັນເປັນທັນສະໄໝຂອງສັງຄົມມະນຸດ ໃນຍຸກສະໄໝແຫ່ງການເຊື່ອມໂຍງ ເຊື່ອມຈອດທາງດ້ານອະລິຍະທຳທີ່ຫລາກຫລາຍໃນທົ່ວທຸກມຸມໂລກ ໃຫ້ບັນລຸຜົນສຳເລັດ. ໃນກອງປະຊຸມຍັງມີຜູ້ນຳຈາກ 13 ພັກການເມືອງ ຮ່ວມປະກອບຄຳເຫັນຕໍ່ກອງປະຊຸມ, ໂດຍຍົກໃຫ້ເຫັນພັນທະໜ້າທີ່ ແລະ ການປະກອບສ່ວນຂອງພັກຕົນເອງ ໃນຂະບວນການພັດທະນາເສດຖະກິດ-ສັງຄົມໃນປະເທດຕົນ ແລະ ກໍສະແດງຄວາມເຫັນດີເຫັນພ້ອມ ຕໍ່ ຂໍ້ລິເລີ່ມຂອງພັກກອມມູນິດຈີນ ທີ່ສະເໜີໂດຍ ສະຫາຍ ສີ ຈິ້ນຜິງ.

ກອງປະຊຸມສົນທະນາລະດັບສູງ ລະຫວ່າງ ພັກກອມມູນິດຈີນ ກັບ ບັນດາພັກການເມືອງໃນໂລກ ໄດ້ຈັດຂຶ້ນມາແຕ່ປີ 2021 ໂດຍການເປັນເຈົ້າພາບຂອງ ພັກກອມມູນິດຈີນ, ເຊິ່ງ ພັກ ປປ ລາວ ກໍໄດ້ຕັ້ງໜ້າເຂົ້າຮ່ວມທຸກຄັ້ງ ເພື່ອແລກປ່ຽນບົດຮຽນກັບບັນດາພັກທີ່ເຂົ້າຮ່ວມ ກໍຄື ເພື່ອຍົກສູງຖານະບົດບາດຂອງພັກ ປປ ລາວ ໃນເວທີສາກົນ

ແລະ ເປັນການປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມືເພື່ອການພັດທະນາໃນພາກພື້ນ ແລະ ໃນໂລກ. ໃນກອງປະຊຸມ, ພັກກອມມູນິດຈີນ ຍັງໄດ້ຍົກໃຫ້ເຫັນຜົນສຳເລັດທີ່ສຳຄັນ ໃນການສ້າງເປັນຄູ່ຮ່ວມຊະຕາກຳ ລາວ-ຈີນ ແລະ ການຮ່ວມມືໃນຂອບ "ໜຶ່ງແລວ ໜຶ່ງເສັ້ນທາງ", ໂດຍສະເພາະ ຜົນສຳເລັດ ເສັ້ນທາງລົດໄຟ ລາວ-ຈີນ ທີ່ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ກໍຄື ການຫັນເປັນທັນສະໄໝໃຫ້ປະຊາຄົມໂລກ.

## 6. ຫົວໜ້າ ຄຕພ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບເອກອັກຄະຣາຊະທູດ ແຫ່ງຣາຊະອານາຈັກໄທ ປະຈຳລາວ



ວັນທີ 07 ມີນາ 2023, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ນາງ ມໍລະກົດ ສີສະຫວັດດີ, ເອກອັກຄະຣາຊະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ຣາຊະອານາຈັກໄທ ປະຈຳ ສປປ ລາວ.

ໃນໂອກາດດັ່ງກ່າວ, ທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຍິນດີ ແລະ ຊົມເຊີຍ ຕໍ່ບັນດາທ່ານເອກອັກຄະລັດຖະທູດ ທີ່ໄດ້ຮັບມອບໝາຍໜ້າທີ່ອັນສຳຄັນໃຫ້ດຳລົງຕຳແໜ່ງເປັນ ເອກອັກຄະຄະຣາຊະວິສາມັນຜູ້ມີອຳນາດເຕັມແຫ່ງ ຣາຊະອານະຈັກໄທ ປະຈຳ ສປປ ລາວ ຄົນໃໝ່ ແລະ ເຊື່ອໝັ້ນວ່າ ດ້ວຍປະສົບການອັນອຸດົມສົມບູນຂອງທ່ານທູດ, ຫວັງຢ່າງຍິ່ງວ່າທ່ານທູດຈະສືບຕໍ່ຍຸກຍູ້ ແລະ ປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື ລາວ-ໄທ ໃຫ້ນັບມື້ນັບແໜ້ນແຟ້ນຍິ່ງໆຂຶ້ນ; ທັງໄດ້ແຈ້ງໃຫ້ທ່ານທູດຄົນໃໝ່ຊາບກ່ຽວກັບ ສະພາບການພົ້ນເດັ່ນໃນການປົກປັກຮັກສາ ແລະ ສ້າງສາພັດທະນາຂອງ ສປປ ລາວ, ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ການພົວພັນຮ່ວມມືລະຫວ່າງ ສອງລັດຖະບານ ລາວ-ໄທ ໃນໄລຍະຜ່ານມາ, ແຈ້ງໃຫ້ຊາບພາລະບົດບາດຂອງຄະນະພົວພັນຕ່າງປະເທດສູນກາງພັກ ໃນການເປັນເສນາທິການດ້ານການຕ່າງປະເທດໃຫ້ແກ່ສູນກາງພັກ ປປ ລາວ ພ້ອມທັງແຈ້ງການພົວພັນດ້ານການທູດປະຊາຊົນກໍຄືສະມາຄົມມິດຕະພາບ ລາວ-ໄທ ຄົບຮອບ 30 ປີ ໃນປີ 2023 ທີ່ມີການຮ່ວມມືຢ່າງໃກ້ຊິດ ແລະ ມີບາດກ້າວຂະຫຍາຍຕົວໃໝ່ ເພື່ອປະກອບສ່ວນສຳຄັນເຂົ້າໃນການພົວພັນຮ່ວມມື ລະຫວ່າງສອງປະເທດ ເພື່ອສົ່ງເສີມຄວາມເຂົ້າອົກເຂົ້າໃຈ, ການຄ້າການລົງທຶນ, ການທ່ອງທ່ຽວ ແລະ ວຽກງານອື່ນໆ ໃນການຮ່ວມມືເພື່ອການພັດທະນາຂອງສອງປະເທດ; ສະແດງຄວາມຍິນດີ ທີ່ຈະໃຫ້ການສະໜັບສະໜູນທ່ານທູດ ໃນການປະຕິບັດໜ້າທີ່ການທູດຢູ່ ສປປ ລາວ, ປະກອບສ່ວນເຂົ້າໃນການຊຸກຍູ້ ສາຍພົວພັນມິດຕະພາບ

ລາວ-ໄທ ໃຫ້ນັບມື້ນັບມີການຂະຫຍາຍຕົວຍິ່ງໆຂຶ້ນ ເພື່ອນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ລາວ-ໄທ ແລະ ໄທ-ລາວ.

7. **ປະທານສະມາຄົມມິດຕະພາບ ລາວ-ຈີນ ຕ້ອນຮັບການເຂົ້າຢ້ຽມຂ່ຳນັບ ຂອງ ສະມາຄົມມິດຕະພາບກັບຕ່າງປະເທດ ແຂວງຢຸນນານ ສປ ຈີນ**



ວັນທີ 15 ມິນາ 2023, ທີ່ ນະຄອນຫຼວງວຽງຈັນ, ທ່ານ ປອ. ເພັດ ພົມພິພັກ, ກຳມະການສູນກາງພັກ, ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ປະທານສະມາຄົມມິດຕະພາບ ລາວ-ຈີນ ຂັ້ນສູນກາງ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບ ຂອງ ທ່ານ ນາງ ຫວາງ ຢູ (Wang Yu), ຮອງປະທານສະມາຄົມມິດຕະພາບກັບຕ່າງປະເທດແຂວງຢຸນນານ ສປ ຈີນ ພ້ອມດ້ວຍຄະນະທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ. ໃນໂອກາດດັ່ງກ່າວ, ທ່ານ ປອ. ເພັດ ພົມພິພັກ ໄດ້ສະແດງຄວາມຍິນດີຕ້ອນຮັບອັນອົບອຸ່ນ ແລະ ຕີລາຄາສູງຕໍ່ການມາຢ້ຽມຢາມ ສປປ ລາວ ໃນຄັ້ງນີ້, ເປັນການປະກອບສ່ວນສຳຄັນເຂົ້າໃນການຮັດແໜ້ນ, ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບທີ່ເປັນມູນເຊື້ອອັນດີງາມ ແລະ ການພົວພັນແບບຄູ່ຮ່ວມຍຸດທະສາດຮອບດ້ານໝັ້ນຄົງຍາວນານ ຕາມທິດ 4 ດີ ແລະ ການສ້າງເປັນຄູ່ຮ່ວມຊາຕາກຳລະຫວ່າງ ລາວ-ຈີນ ສືບຕໍ່ໄດ້ຮັບການເສີມຂະຫຍາຍ; ບັນດາຂະແໜງການ ມີການພົວພັນຮ່ວມມືຢ່າງມີປະສິດທິພາບ ແລະ ປະສິດທິຜົນ ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງປະເທດ ລາວ ແລະ ຈີນ. ທ່ານ ປອ. ເພັດ ພົມພິພັກ ຍັງໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ບັນດາຜົນສຳເລັດ ຂອງ ປະຊາຊົນຈີນ ທີ່ຍາດມາໄດ້ໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດໃນໄລຍະຜ່ານມາ.

**8. ຮອງຫົວໜ້າ ຄຕພ ຕ້ອນຮັບການເຂົ້າອວຍພອນຂອງສະຫາຍເອກອັກຄະລັດຖະທູດ ສປປ ເກົາຫຼີ ປະຈຳລາວ**



ວັນທີ 15 ມີນາ 2023, ສະຫາຍ ສົມພອນ ສີຈະເລີນ, ຮອງຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ສະຫາຍ ລີ ຢົງຊິນ, ເອກອັກຄະລັດຖະທູດວິສາມັນ ຜູ້ມີອຳນາດເຕັມ ແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ ເພື່ອນຳເອົາສານຊົມເຊີຍ ຈາກ ສະຫາຍ ກິມເຈີງອຸນ, ເລຂາທິການໃຫ່ຍພັກແຮງງານ ເກົາຫຼີ, ປະທານກິດຈະການແຫ່ງລັດ ແຫ່ງ ສາທາລະນະລັດ ປະຊາຊົນ ປະຊາທິປະໄຕ ເກົາຫຼີ ສົ່ງເຖິງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ພັກປະຊາຊົນ ປະຕິວັດລາວ, ປະທານປະເທດແຫ່ງ ສປປ ລາາວ ເນື່ອງໃນໂອກາດ ວັນ ສ້າງຕັ້ງ ພັກ ປປ ລາວ ຄົບຮອບ 68 ປີ.

**9. ຮອງຫົວໜ້າ ຄຕພ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ສະຫາຍກຳມະການພັກກອມມູນິດຝຣັ່ງ**



ວັນທີ 24 ມີນາ 2023, ສະຫາຍ ສົມພອນ ສີຈະເລີນ, ຮອງເລຂາຄະນະພັກ, ຮອງຫົວໜ້າຄະນະພົວພັນ ຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການຢ້ຽມຂໍ່ານັບ ຂອງ ສະຫາຍ ຟີລິບ ລີໂອ (Phillippe Rio), ກຳມະການພັກ ກອມມູນິດຝຣັ່ງ, ເຈົ້າເມືອງ ເມືອງ Gringny, ປະເທດຝຣັ່ງ. ສະຫາຍ ຟີລິບ ລີໂອ ໄດ້ກ່າວວ່າ ການຢ້ຽມຢາມຄັ້ງນີ້ ເປັນການສືບຕໍ່ການຮ່ວມມື ແລະ ເສີມຂະຫຍາຍການຕົກລົງຂອງສອງພັກ ນັບແຕ່ ສະຫາຍ ປີແອັກ ລໍຮອງ (Pierre

Laurent), ເລຂາທິການໃຫຍ່ ພັກກອມມູນິດຝຣັ່ງ ໄດ້ຢ້ຽມຢາມ ສປປ ລາວ ຢ່າງທາງການ ໃນປີ 2015 ຜ່ານມາ; ສະຫາຍ ຍັງໄດ້ເຊື້ອເຊີນຜູ້ແທນພັກ ປປ ລາວ ເຂົ້າຮ່ວມກອງປະຊຸມໃຫຍ່ ຄັ້ງທີ 39 ຂອງພັກກອມມູນິດຝຣັ່ງ ທີ່ຈະຈັດຂຶ້ນ ໃນວັນທີ 7-10/04/2023 ນີ້. ສ່ວນ ສະຫາຍ ສິມພອນ ສີຈະເລີນ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ການຢ້ຽມຢາມຄັ້ງນີ້, ເປັນການເສີມຂະຫຍາຍການພົວພັນລະຫວ່າງສອງພັກ ທີ່ມີແຕ່ດົນນານ, ຊຶ່ງຍາມໃດ ພັກ ປປ ລາວ ກໍໃຫ້ຄວາມສຳຄັນ ແລະ ຮູ້ບຸນຄຸນ ຕໍ່ການຊ່ວຍເຫຼືອຂອງພັກກອມມູນິດຝຣັ່ງ ຕັ້ງແຕ່ສະໄໝຕໍ່ສູ້ກູ້ຊາດລາວເປັນຕົ້ນມາ; ສະຫາຍ ສິມພອນ ຍັງໄດ້ແຈ້ງໃຫ້ຊາບ ກ່ຽວກັບບາດກ້າວການພັດທະນາເສດຖະກິດ ສັງຄົມຂອງລາວ ໂດຍສະເພາະແມ່ນຄວາມສຳເລັດໃນການສ້າງເສັ້ນທາງລົດໄຟລາວ-ຈີນ ທີ່ເລີ່ມເປີດນຳໃຊ້ ແຕ່ຕົ້ນປີ 2022 ເປັນຕົ້ນມາ ຊຶ່ງໄດ້ອຳນວຍຄວາມສະດວກໃຫ້ແກ່ປະຊາຊົນທັງສອງຊາດ ແລະ ຊຸກຍູ້ຂະແໜງການທ່ອງທ່ຽວໄດ້ເປັນຢ່າງດີ ແລະ ວ່າ ພັກ ປປ ລາວ ຈະສືບຕໍ່ການພົວພັນອັນດີກັບພັກກອມມູນິດຝຣັ່ງ ແລະ ພ້ອມຈະສົ່ງຜູ້ແທນພັກເຂົ້າຮ່ວມກອງປະຊຸມໃຫຍ່ ຄັ້ງທີ 39 ຂອງພັກ ຕາມການເຊື້ອເຊີນ.

# IV. ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ ຄຕພ

## 1. ກອງປະຊຸມສະຫຼຸບການເຄື່ອນໄຫວປະຈຳປີ 2022 ຂອງສະຫະພັນແມ່ຍິງ ຄຕພ



ວັນທີ 02 ມີນາ 2023, ທີ່ ສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ, ຄະນະບໍລິຫານງານສະຫະພັນແມ່ຍິງຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານປະຈຳປີ 2022, ພ້ອມທັງມອບໃບຍ້ອງຍໍ 03 ດີ ປະຈຳປີ 2022 ຂອງສະຫະພັນແມ່ຍິງ ຄຕພ ແລະ ສະເຫຼີມສະຫຼອງ ວັນແມ່ຍິງສາກົນ 08 ມີນາ ຄົບຮອບ 113 ປີ (8/3/1910–8/3/2023) ພາຍໃຕ້ ຄຳຂວັນ “ການນຳໃຊ້ດິຈິຕອນສຳລັບທຸກຄົນ: ການໃຊ້ນະວັດຕະກຳ ແລະ ເຕັກໂນໂລຊີ ເພື່ອຄວາມສະເໝີພາບຍິງ-ຊາຍ”, ໂດຍການເປັນປະທານຂອງ ສະຫາຍ ນາງ ສີຣິພອນ ຄູຫາເທບ, ຄະນະພັກ ຄຕພ, ຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ປະທານຄະນະບໍລິຫານງານສະຫະພັນແມ່ຍິງ ຄຕພ ແລະ ໃຫ້ກຽດເຂົ້າຮ່ວມໂດຍ ສະຫາຍ ວາລະໄຊ ເລັ່ງສະຫວັດ, ກຳມະການຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ. ພ້ອມນັ້ນ, ຍັງມີຕາງໜ້າບັນດາໜ່ວຍພັກ, ອົງການຈັດຕັ້ງກຳມະບານ, ຊາວໜຸ່ມ ແລະ ສະມາຊິກແມ່ຍິງ ທົ່ວຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມ ສະຫາຍ ນາງ ສີຣິພອນ ຄູຫາເທບ ໄດ້ຂຶ້ນຜ່ານການສະຫຼຸບການເຄື່ອນໄຫວວຽກງານຂອງຄະນະບໍລິຫານງານສະຫະພັນແມ່ຍິງ ຄຕພ ປະຈຳປີ 2022, ໂດຍໄດ້ຍົກໃຫ້ເຫັນການຕີລາຄາບັນດາຜົນສຳເລັດ, ຈຸດດີ, ຈຸດອ່ອນ ແລະ ສະເໜີທິດທາງແຜນການ ປະຈຳປີ 2023. ສະຫະພັນແມ່ຍິງ ຄຕພ ສາມາດຍາດມາໄດ້ຜົນສຳເລັດຫຼາຍດ້ານ ເປັນຕົ້ນ ການສຶກສາອົບຮົມການເມືອງ-ແນວຄິດ ຊຶ່ງເຮັດໃຫ້ສະມາຊິກແມ່ຍິງ ພາຍໃນ ຄຕພ ມີແນວຄິດອຸ່ນອ່ຽງໜຸ່ນທ່ຽງ, ມີສະຕິ, ມີຄວາມເຊື້ອໝັ້ນຕໍ່ການນຳພາຂອງພັກ; ສາມາດເຊື່ອມຊຶມແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດລະບຽບຂອງລັດ, ຮູ້ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຂອງພັກ ຄັ້ງທີ XI, ມະຕິກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວ ທົ່ວປະເທດ ຄັ້ງທີ VIII, ມະຕິກອງປະຊຸມໃຫຍ່ ຄັ້ງທີ II ຂອງອົງຄະນະພັກ ຄຕພ ແລະ ມະຕິກອງປະຊຸມໃຫຍ່ ຄັ້ງທີ I, ຂອງສະມາຊິກສະຫະພັນແມ່ຍິງ ຄຕພ ໃຫ້ເປັນແຜນງານ, ໂຄງການເຄື່ອນໄຫວຂອງຕົນ. ສະຫະພັນແມ່ຍິງ ຄຕພ ຍັງໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານວິຊາສະເພາະ ທີ່ເປັນໜ້າທີ່ການເມືອງຕົ້ນຕໍຂອງຕົນ ດ້ວຍຄວາມເປັນເຈົ້າການ ແລະ ມີຜົນສຳເລັດສູງ. ກອງປະຊຸມ ຍັງໄດ້ສະຫຼຸບຕີລາຄາການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ປະຈຳປີ 2022 ຂອງສະຫະພັນແມ່ຍິງ ຄຕພ ໂດຍໄດ້ສະຫຼຸບຕີລາຄາຜົນສຳເລັດການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ໃນໄລຍະທີ I, ຈຸດດີ, ຈຸດອ່ອນ ແລະ ທິດທາງແຜນການໃນຕໍ່ໜ້າ, ສະຫະພັນແມ່ຍິງ ຄຕພ ສາມາດຍາດປະຕິບັດຂໍ້ແຂ່ງຂັນ 03 ດີໄດ້ 100%, ໜ່ວຍແມ່ຍິງ 03 ດີ ປະເພດ 01 ຈຳນວນ 04 ໜ່ວຍ. ນອກນີ້, ສະມາຊິກແມ່ຍິງ ຄຕພ ໄດ້ຮັບໃບຍ້ອງຍໍ 03

ດີ ຈາກປະທານຄະນະບໍລິຫານງານສະຫະພັນແມ່ຍິງ ຄຕພ ຈຳນວນ 41 ສະຫາຍ. ໃນຕອນທ້າຍ, ສະຫາຍ ວາລະໄຊ ເລັ່ງສະຫວັດ ໄດ້ໃຫ້ກຽດໂອ້ລົມ ໂດຍໄດ້ຍ້ອງຍໍຊົມເຊີຍຜົນງານ ທີ່ຍາດມາໄດ້ໃນປີຜ່ານມາ ແລະ ໃຫ້ທິດຊີ້ນຳຕໍ່ວຽກງານຈຳນວນໜຶ່ງທີ່ຕ້ອງໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດໃນຕໍ່ໜ້າ, ອັນໄດ້ເປັນເຂັມຊີ້ທິດເປືອງທາງໃຫ້ແກ່ສະມາຊິກແມ່ຍິງທີ່ວຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມທັງເນັ້ນໜັກໃຫ້ສະມາຊິກແມ່ຍິງ ຄຕພ ຍົກສູງຄວາມຮັບຜິດຊອບໜ້າທີ່ການເມືອງຂອງຕົນ ເພື່ອປະກອບສ່ວນເຂົ້າໃນການເຄື່ອນໄຫວຕ່າງປະເທດຂອງພັກ ກໍຄືການເຄື່ອນໄຫວວຽກງານລວມຂອງຄະນະພົວພັນຕ່າງປະເທດສູນກາງພັກ.

**2. ບັນດາອົງການຈັດຕັ້ງມະຫາຊົນ ຄຕພ ຢ້ຽມຊົມຫໍພິພິຕະພັນໄກສອນ ພົມວິຫານ**



ວັນທີ 23 ມີນາ 2023, 3 ອົງການຈັດຕັ້ງມະຫາຊົນຂອງ ຄຕພ ນຳໂດຍ ສະຫາຍ ນາງ ສີຣິພອນ ຄູຫາເທບ, ຄະນະພັກ ຄຕພ, ປະທານສະຫະພັນແມ່ຍິງ, ສະຫາຍ ຄຳເຜືອງ ພັນທະໄຊ, ຄະນະພັກ, ເລຂາຄະນະບໍລິຫານງານຊາວໜຸ່ມ ຄຕພ, ພ້ອມດ້ວຍສະມາຊິກແມ່ຍິງ, ຊາວໜຸ່ມ ແລະ ກຳມະບານ 30 ກວ່າຄົນ ໄດ້ເຂົ້າຢ້ຽມຊົມ ຫໍພິພິຕະພັນໄກສອນ ພົມວິຫານ, ເພື່ອຊົມເຊີຍວັນສ້າງຕັ້ງ ພັກ ປປ ລາວ ຄົບຮອບ 68 ປີ, ທັງເປັນການສ້າງຂະບວນການຂໍ່ານັບຮັບຕ້ອນ ວັນສ້າງຕັ້ງ ຄະນະພົວພັນຕ່າງປະເທດສູນກາງພັກ ຄົບຮອບ 40 ປີ ໃນເດືອນ ມິຖຸນາ ທີ່ຈະມາເຖິງນີ້.